ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-15 ມິຖຸນາ 2025
ປີທີ 14
ສະບັບທີ 1021
ລາຍສັປະດາ

## ກອງປະຊຸມສະໄໝສາມັນເທື່ອທີ 9 ໄຂຂຶ້ນຢ່າງເປັນທາງການ



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການໃນຕອນເຊົ້າວັນຈັນທີ 9 ມິຖຸນານີ້ ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງ

ອ່ານຕໍ່ໜ້າ 8

## ປະດັບຫຼຽນກາລະນຶກ 70 ປີ ພັກ ປປລາວ ໃຫ້ສະມາຊິກພັກພາຍໃນສະພາແຫ່ງຊາດ




(ສພຊ) - ພິທີປະດັບຫຼຽນກາລະນຶກ 70 ປີ ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ (ພັກ ປປລາວ) ໃຫ້ສະມາຊິກພັກພາຍໃນສະພາແຫ່ງຊາດ ໄດ້ຈັດຂຶ້ນໃນວັນທີ 12 ມິຖຸນານີ້ ໂດຍການເປັນປະທານຂອງສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ; ເຂົ້າຮ່ວມມີສະຫາຍ ຄຳໃບ ດຳລັດ ກຳມະການສູນກາງພັກ, ປະທານຄະນະກວດກາພັກສະພາແຫ່ງຊາດ ພ້ອມດ້ວຍບັນດາສະຫາຍສະມາຊິກພັກບຳນານແລະປະຈຳການພາຍໃນສະພາແຫ່ງຊາດ.

ໃນພິທີ, ໄດ້ຜ່ານມະຕິຕົກລົງຂອງຄະນະເລຂາທິການສູນກາງພັກວ່າດ້ວຍການປະດັບຫຼຽນກາລະນຶກ 70 ປີ ວັນສ້າງ

ອ່ານຕໍ່ໜ້າ 4



ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ວຽກງານຈັດຕັ້ງໃນໄລຍະໃໝ່ ແມ່ນກວ້າງຂວາງທີ່ສຸດ, ອຸດົມຮັ່ງມີທີ່ສຸດ ແລະ ກໍ່ສັບສົນທີ່ສຸດ, ມີແຕ່ເຮັດວຽກຈັດຕັ້ງໄດ້ດີ ພັກຈຶ່ງເຂັ້ມແຂງໜັກແໜ້ນ ແລະ ເຮັດຫຼ້ອນໜ້າທີ່ນຳພາຂອງຕົນໄດ້ຢ່າງແທ້ຈິງ.

(ປຶ້ມສັງລວມບົດໂອ້ລົມຕໍ່ຂັ້ນສູນກາງ, ໜ້າທີ 65)

ໂຄງປະກອບຂອງແນວໂຮມ ຈະຕ້ອງປະກອບດ້ວຍຜູ້ທີ່ເປັນສັນຍະລັກ, ເປັນຕົວແທນທີ່ດີເດັ່ນໃຫ້ແກ່ບັນດາອົງການຈັດຕັ້ງມະຫາຊົນ, ບັນດາເຜົ່າ, ຊັ້ນຄົນ ແລະ ສາສະໜາ ຢ່າງກວ້າງຂວາງ; ມີຜູ້ທີ່ມີຄວາມສາມາດໃນການຄົ້ນຄວ້າ ແລະ ຊີ້ນຳວຽກງານ, ຮັບປະກັນລັກສະນະສືບທອດ ຕໍ່ເນື່ອງກັນ.

(ນິພົນເລືອກເຟັ້ນ ເຫຼັ້ມ IV, ໜ້າ 110)

ອ່ານຕໍ່ສະບັບໜ້າ

## 6 ເດືອນທ້າຍປີ ຈະສູ້ຊົນໃຫ້ GDP ຂະຫຍາຍຕົວ 4.8%



(ສພຊ) - ປີ 2025 ເປັນປີສຸດທ້າຍຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025). ດັ່ງນັ້ນ, ໃນໄລຍະ 6 ເດືອນທ້າຍປີ 2025, ລັດຖະບານ ຈະເພີ່ມຄວາມພະຍາຍາມ ແລະ ຍົກສູງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ 9 ວຽກຈຸດສຸມ ຕາມມະຕິກອງ

ອ່ານຕໍ່ໜ້າ 7

## 5 ເດືອນຕົ້ນປີ ອັດຕາເງິນເຟີ້ຢູ່ໃນລະດັບ 11.76%

(ສພຊ) - ອີງຕາມການລາຍງານຂອງທ່ານນາຍົກລັດຖະມົນຕີສອນໄຊ ສີພັນດອນ ກ່ຽວກັບການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີແລະທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2025 ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະ

ອ່ານຕໍ່ໜ້າ 6



## ສະເໜີລັດຖະບານເອົາໃຈໃສ່ 10 ມາດຕະການ



(ສພຊ) - ວາລະກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 9 ມິຖຸນານີ້, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ມີຄຳເຫັນຕໍ່ທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2025 ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແລະ ການແກ້ໄຂບັນຫາເຄັ່ງຮ້ອນທາງເສດຖະກິດ ເຊິ່ງໄດ້ສະເໜີໃຫ້ລັດຖະບານເອົາໃຈໃສ່ 10 ມາດຕະການດັ່ງນີ້:

1. ເພີ່ມທະວີຄວາມເອົາໃຈໃສ່ໃນການຜັນຂະຫຍາຍມະຕິຂອງກົມການເມືອງສູນກາງພັກກ່ຽວກັບການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກຄັ້ງທີ 9 ສະໄໝທີ XI, ມະຕິຂອງສະພາແຫ່ງຊາດ, ວຽກຈຸດສຸມຂອງ 2 ວາລະແຫ່ງຊາດໃນໄລຍະປີມ້ວນທ້າຍຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ຕິດພັນກັບແຜນເງິນຕາ ຄັ້ງທີ IX (2021-2025) ໃຫ້ມີຜົນສຳເລັດຕາມຄາດໝາຍ.

2. ສືບຕໍ່ປະຕິບັດຄາດ

ອ່ານຕໍ່ໜ້າ 7

## 6 ເປົ້າໝາຍ 26 ແຜນວຽກຈຸດສຸມ ໃນການພັດທະນາເສດຖະກິດ-ສັງຄົມ ຄັ້ງທີ X



(ສພຊ) - ຕາມວາລະການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເມື່ອຕອນບ່າຍວັນທີ 11 ມິຖຸນາຜ່ານມາ ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ປະທານສະພາແຫ່ງຊາດ; ທ່ານ ເພັດ ພົມພິພັກ ຕາງໜ້າຄະນະຮັບຜິດຊອບ

ອ່ານຕໍ່ໜ້າ 5



ອັນຕະລາຍ... (ໜ້າ 9)



ສະພາແຫ່ງຊາດ... (ໜ້າ 10)




ມາດຕະການທາງກົດໝາຍ... (ໜ້າ 11)

**ຊົມເຊີຍ ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!**

# ສູນທອນພິດປະທານສະພາແຫ່ງຊາດ ກ່າວໄຂ ກອງປະຊຸມສະໄໝສາມັນເທື່ອທີ 9 ສະພາແຫ່ງຊາດຊຸດທີ IX

(ສພຊ) - ໃນພິທີເປີດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ກ່າວສູນທອນພິດເປີດກອງປະຊຸມວ່າ: ມື້ນີ້, ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ, ທົ່ວກໍາລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງລັດ 5 ປີ ຄັ້ງທີ IX ໄລຍະມ້ວນທ້າຍສະໄໝແລະກະກຽມການສ້າງຂະບວນການສະເຫຼີມສະຫຼອງ 3 ວັນປະຫວັດສາດ ນັ້ນຄື: ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 70 ປີ, ວັນສະຖາປະນາ ສປປ ລາວ ຄົບຮອບ 50 ປີ ແລະ ວັນເກີດຂອງປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ.

ສະພາແຫ່ງຊາດ ໃນຖານະທີ່ເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ, ເປັນອົງການສູງສຸດແຫ່ງອໍານາດລັດ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກໍານົດໄວ້ໃນລັດຖະທໍາມະນູນ, ກົດໝາຍ ເຮັດໃຫ້ການເຄື່ອນໄຫວວຽກງານໃນໄລຍະ6ເດືອນຕົ້ນປີ2025 ໄດ້ຮັບຜົນສໍາເລັດຢ່າງຈົບງາມ, ອັນພົ້ນເດັ່ນແມ່ນການພິຈາລະນາຮັບຮອງເອົາການປັບປຸງລັດຖະທໍາມະນູນ ສະບັບປີ 2025, ການປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ, ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ, ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ທີ່ໄດ້ຖືກຮັບຮອງໃນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ຜ່ານມາ; ນອກນັ້ນ, ຄະນະປະຈໍາສະພາແຫ່ງຊາດກໍໄດ້ມີການພິຈາລະນາຮັບຮອງເອົາການປັບປຸງເນື້ອໃນບາງມາດຕາຂອງກົດໝາຍວ່າດ້ວຍປະກັນສັງຄົມ ເຊິ່ງເປັນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກເປັນອັນລະອຽດ ໂດຍສອດຄ່ອງກັບເນື້ອໃນຂອງລັດຖະທໍາມະນູນ ສະບັບປັບປຸງປີ 2025.

ເຖິງວ່າໃນໄລຍະ6ເດືອນຕົ້ນປີ2025, ສະພາບແວດລ້ອມຂອງພາກພື້ນແລະສາກົນພວມມີການຜັນແປໄປຢ່າງສັບສົນ, ວ່ອງໄວ, ສະຫຼັບຊັບຊ້ອນ, ຄາດຄະເນໄດ້ຍາກທີ່ມີທັງສິ່ງທ້າທາຍ ແລະກາລະໂອກາດທີ່ສົ່ງຜົນກະທົບຕໍ່ບັນດາປະເທດໃນໂລກ ລວມທັງປະເທດລາວພວກເຮົາ, ບວກກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ສົ່ງຜົນກະທົບໂດຍກົງຕໍ່ການພັດທະນາເສດຖະກິດ-ສັງຄົມ, ການດໍາລົງຊີວິດຂອງພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ ແລະ ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ; ແຕ່ດ້ວຍຄວາມພະຍາຍາມ, ເອົາໃຈໃສ່ນໍາພາ-ຊີ້ນໍາຂອງສູນກາງພັກ, ຂອງກົມການເມືອງສູນກາງພັກ, ການເຮັດວຽກຮ່ວມກັນຢ່າງໃກ້ຊິດ ແລະ ຫ້າວຫັນ ລະຫວ່າງສະພາແຫ່ງຊາດ ແລະ ລັດຖະບານ ໃນການແກ້ໄຂບັນຫາທີ່ເຄັ່ງຮ້ອນຕ່າງໆ ໂດຍສະເພາະການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄດ້ມີຜົນສໍາເລັດດີຂຶ້ນເລື້ອຍໆ, ເຮັດໃຫ້ເສດຖະກິດຂອງປະເທດສືບຕໍ່ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ບັນດາຄາດໝາຍທາງດ້ານເສດຖະກິດ-ສັງຄົມ ສາມາດບັນລຸໄດ້ຕາມແຜນເຊິ່ງເປັນການປະກອບສ່ວນທີ່ສໍາຄັນເຮັດໃຫ້ປະເທດຊາດສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດຍັງສືບຕໍ່ມີທ່າອຽງເຕີບໂຕ ແລະ ຂະຫຍາຍຕົວຕໍ່ເນື່ອງ, ບົດບາດຂອງປະເທດເຮົາໄດ້ຮັບການຍົກສູງພົ້ນເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ໂດຍປະຕິບັດຕາມລັດຖະທໍາມະນູນແລະກົດໝາຍວ່າດ້ວຍສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ຈະໄດ້ພິຈາລະນາຮັບຮອງບັນຫາສໍາຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

1. ບົດລາຍງານຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2025 ແລະ ແຜນການ6ເດືອນທ້າຍປີ2025 ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແລະ ການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ;

2.ບົດລາຍງານກ່ຽວກັບການທາບທາມຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030);

3. ບົດລາຍງານກ່ຽວກັບນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງທາງໄລຍະໃໝ່;

4.ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດບັນດານະໂຍບາຍ, ນິຕິກໍາ, ກົນໄກຕ່າງໆ ໃນການພັດທະນາພະລັງງານໄຟຟ້າ;

5. ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດປີທ່ອງທ່ຽວລາວ ແລະ ທິດທາງແຜນການໃນຕໍ່ໜ້າ;

6. ບົດລາຍງານກ່ຽວກັບຜົນການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍທົ່ວປະເທດ;

7.ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ9ແລະທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX;

8.ບົດລາຍງານກ່ຽວກັບການທາບທາມຮ່າງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X;

9. ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈໍານວນ 10 ສະບັບ ໃນນີ້, ມີກົດໝາຍສ້າງໃໝ່ 5 ສະບັບຄື: ກົດໝາຍວ່າດ້ວຍຄວາມປອດໄພໄຊເບີ, ກົດໝາຍວ່າດ້ວຍສັງຄົມສົງເຄາະ, ກົດໝາຍວ່າດ້ວຍພະນັກງານໄອຍະການປະຊາຊົນ, ກົດໝາຍວ່າດ້ວຍສາມັນສຶກສາ, ກົດໝາຍວ່າດ້ວຍການປູກຝັງ ແລະ ກົດໝາຍປັບປຸງ 5 ສະບັບຄື: ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ, ກົດໝາຍວ່າດ້ວຍອາກອນລາຍໄດ້, ກົດໝາຍວ່າດ້ວຍປ້າຍ, ກົດໝາຍວ່າດ້ວຍຊົນລະປະທານ, ກົດໝາຍວ່າດ້ວຍສານປະຊາຊົນ.

ນອກນັ້ນ, ກອງປະຊຸມຄັ້ງນີ້ ຍັງຈະໄດ້ຮັບຟັງການຊີ້ແຈງຂອງສະມາຊິກລັດຖະບານແລະພາກສ່ວນກ່ຽວຂ້ອງຈໍານວນໜຶ່ງຕໍ່ຄໍາຊັກຖາມຂອງບັນດາທ່ານສະມາຊິກສະພາແຫ່ງຊາດ.

ກອງປະຊຸມສະໄໝສາມັນເທື່ອທີ 9 ຄັ້ງນີ້ ຈະໄດ້ພິຈາລະນາຕົກລົງຮັບຮອງເອົາບັນຫາສໍາຄັນພື້ນຖານຂອງປະເທດຊາດ. ສະນັ້ນ, ເພື່ອຮັບປະກັນເຮັດໃຫ້ການຕົກລົງມີຄຸນນະພາບ, ມີປະສິດທິຜົນ ແລະ ບັນລຸຜົນຕາມແຜນການທີ່ວາງໄວ້, ໃນນາມປະທານກອງປະຊຸມ ຂ້າພະເຈົ້າຂໍຮຽກຮ້ອງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ໃຫ້ການຮ່ວມມືໃນການສະໜອງຂໍ້ມູນທີ່ຮັດກຸມ, ຊັດເຈນຈະແຈ້ງ ເພື່ອສະດວກໃນການພິຈາລະນາຮັບຮອງແລະຂໍຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງໄດ້ນໍາໃຊ້ສິດປະຊາທິປະໄຕ, ເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນ ໃນການສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າເນື້ອໃນຢ່າງເລິກເຊິ່ງ, ປະກອບຄໍາເຫັນຕໍ່ທຸກບັນຫາຕ່າງໆຢ່າງຖີ່ຖ້ວນ, ສ້າງສັນ, ຮັດກຸມ, ພາວະວິໄສ, ມີເຫດມີຜົນ, ແທດຕົວຈິງ ບົນພື້ນຖານແນວທາງປ່ຽນແປງໃໝ່ຂອງພັກ, ລັດຖະທໍາມະນູນ, ກົດໝາຍຂອງລັດແລະສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມຂອງປະເທດເຮົາໃນປັດຈຸບັນ ພ້ອມກັນຊອກຫາວິທີການ, ມາດຕະການແກ້ໄຂທີ່ສອດຄ່ອງ ແລະ ມີຂໍ້ສະເໜີຕໍ່ລັດຖະບານ ເພື່ອຊອກວິທີແກ້ໄຂບັນຫາຮີບດ່ວນ ແລະ ເຄັ່ງຮ້ອນຂອງສັງຄົມພວກເຮົາໃນປັດຈຸບັນ ເຊິ່ງປະຊາຊົນຍັງມີຄວາມເປັນຫ່ວງແລະຄອງຄອຍການແກ້ໄຂບັນຫາຕ່າງໆໃຫ້ເປັນຮູບປະທໍາຫຼາຍຂຶ້ນກວ່າເກົ່າ; ພ້ອມກັນນັ້ນ, ສ້າງຄວາມເປັນເອກະພາບສູງຕໍ່ເນື້ອໃນທີ່ນໍາມາພິຈາລະນາໃນກອງປະຊຸມຄັ້ງນີ້ ໃຫ້ມີປະສິດທິພາບ, ປະສິດທິຜົນ ສາມາດຮັບຮອງອອກເປັນມະຕິ ແລະ ນໍາໄປຈັດຕັ້ງປະຕິບັດຢ່າງເປັນຮູບປະທໍາຢ່າງແທ້ຈິງ.

# ສາມາດແກ້ໄຂບັນຫາຂາດແຄນຄູໄດ້ໂດຍພື້ນຖານ



(ສພຊ) - ຕາມການລາຍງານຂອງທ່ານນາຍົກລັດຖະມົນຕີສອນໄຊ ສີພັນດອນ ກ່ຽວກັບການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2025 ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແລະ ການແກ້ໄຂບັນຫາເຄັ່ງຮ້ອນທາງເສດຖະກິດ ໂດຍສະເພາະວຽກງານຂົງເຂດວັດທະນະທໍາ-ສັງຄົມ ເຊິ່ງສະແດງອອກດັ່ງນີ້:

1. ສືບຕໍ່ສຸມໃສ່ແກ້ໄຂສະພາບຂາດຄູສອນ ໂດຍສຸມໃສ່ປະຕິບັດຕາມນະໂຍບາຍແລະມາດຕະການທີ່ລັດຖະບານໄດ້ກໍານົດໃນມະຕິ 09/ລບ ເປັນຕົ້ນ: ເພີ່ມເງິນເບ້ຍລ້ຽງໃຫ້ນັກສຶກສາທີ່ຮຽນສາຍຄູ, ກໍານົດໂກຕາຄູສອນໃຫ້ສອດຄ່ອງກັບແຜນກໍ່ສ້າງຄູ, ທັນຄູອາສາສະໝັກເຂົ້າເປັນລັດຖະກອນຄູ ແລະ ທົດແທນຄູທີ່ສູນເສຍດ້ວຍຮູບການຕ່າງໆ; ປະຕິບັດນະໂຍບາຍໃຫ້ພະນັກງານບໍານານທີ່ຍັງແຂງແຮງ ແລະ ທະຫານຊາຍແດນ ຊ່ວຍສິດສອນໃນໂຮງຮຽນທີ່ຂາດຄູສອນ; ປະຕິບັດນະໂຍບາຍເອົາຄູອາສາສະໝັກເຂົ້າບັນຈຸເປັນທະຫານພັນທະ ແຕ່ປະຕິບັດໜ້າທີ່ຄູສອນ ເຊິ່ງສາມາດແກ້ໄຂບັນຫາການຂາດແຄນຄູໄດ້ໂດຍພື້ນຖານ.

2. ສຸມໃສ່ປັບປຸງ ແລະ ຍົກລະດັບຕາໜ່າງການບໍລິການສາທາລະນະສຸກໃນທົ່ວປະເທດ ໂດຍກໍ່ສ້າງຍົກລະດັບພື້ນຖານໂຄງລ່າງ ແລະ ພັດທະນາບຸກຄະລາກອນທາງການແພດທັງຢູ່ສູນກາງ ແລະ ທ້ອງຖິ່ນ; ສືບຕໍ່ເພີ່ມການສະໜອງອຸ ປະກອນການແພດ ແລະ ພາຫະນະນໍາສົ່ງຄົນເຈັບ ໃຫ້ໂຮງໝໍຂັ້ນຕ່າງໆ; ສຸມໃສ່ປັບປຸງການບໍລິການສຸຂະພາບແມ່ ແລະ ເດັກ, ໂພຊະນາການ, ການຊົມໃຊ້ນໍ້າສະອາດ, ວິດຖ່າຍ, ສ້າງບ້ານສາທາລະນະສຸກແບບຢ່າງ ແລະ ວຽກງານຮັກສາສຸຂະພາບຂັ້ນຕົ້ນ.

3. ເອົາໃຈໃສ່ແກ້ໄຂສະພາບຂາດແຄນແຮງງານ ໂດຍສາມາດພັດທະນາສີມືແຮງງານເພື່ອນໍາເຂົ້າສູ່ຕໍາແໜ່ງງານໃໝ່ໄດ້ 97,793 ຄົນ ຍິງ 47,141 ຄົນ; ຈັດຫາວຽກເຮັດງານທໍາຢູ່ພາຍໃນ ແລະ ຕ່າງປະເທດ ໄດ້ 83,765 ຄົນ ຍິງ 44,772 ຄົນ ລື່ນແຜນການປີ 80.15% (ແຜນການ: 46,497 ຄົນ), ໃນນີ້: ຈັດຫາງານພາຍໃນ 7,637 ຄົນ ແລະ ຈັດສົ່ງໄປອອກແຮງງານຢູ່ຕ່າງປະເທດ 76,128 ຄົນ.

- ສຸມໃສ່ຂະຫຍາຍອັດຕາການປົກຄຸມປະກັນສັງຄົມທັງພາກລັດ, ວິສາຫະກິດ ແລະ ຜູ້ສະໝັກໃຈຂຶ້ນທະບຽນໃໝ່ໄດ້ 14,188 ຄົນເທົ່າກັບ 24.25% ຂອງແຜນການປີ (ມະຕິສະພາແຫ່ງຊາດ 58,500 ຄົນ); ປັບປຸງວິທີການບໍລິ ຫານຄຸ້ມຄອງກອງທຶນໃຫ້ມີຄວາມຮັດກຸມ, ວ່ອງໄວ, ໂປ່ງໃສ, ສາມາດກວດສອບໄດ້ ແລະ ພັດທະນາລະບົບຖານຂໍ້ມູນ ສາມາດເຊື່ອມຕໍ່ລະຫວ່າງສູນກາງ ແລະ ທ້ອງຖິ່ນ ແລະ ເຊື່ອມຕໍ່ກັບພາກສ່ວນທາງນອກຕາມທິດທັນເປັນທັນສະໄໝ; ສຸມໃສ່ຄົ້ນຄວ້າການໂຮມກອງທຶນປະກັນສຸຂະພາບເຂົ້າກັບກອງທຶນປະກັນສັງຄົມເປັນອັນດຽວກັນ ຕາມມະຕິຂອງສະພາແຫ່ງຊາດ.

- ອະນຸມັດງົບປະມານໂຄງການຟື້ນຟູສຸກເສີນຈາກຜົນກະທົບໄພພິບັດ 76 ໂຄງການ ມູນຄ່າ 174.93 ກວ່າຕື້ກີບ.

- ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ, ຄຸນງາມຄວາມດີໃນພາລະກິດການປະຕິວັດຊາດປະຊາທິປະໄຕ, ໃນງວດ 1/2025 ປະຕິບັດໄດ້ 354 ທ່ານ ຍິງ 30 ທ່ານເປັນເງິນ 6.99 ຕື້ກວ່າກີບ.

- ກວດກູ້ລະເບີດບໍ່ທັນແຕກອອກຈາກພື້ນທີ່ທໍາການຜະລິດ ແລະ ເຂດຊຸມຊົນ ໃນເນື້ອທີ່ 929 ເຮັກຕາ ເທົ່າກັບ 29.31% ຂອງແຜນການ (ແຜນການປີ 3,170 ເຮັກຕາ) ແລະ ສາມາດທໍາລາຍຖິ້ມລະເບີດຈໍານວນ 9,944 ໜ່ວຍ.

4. ພະຍາຍາມປັບປຸງ, ຍົກລະດັບເຄື່ອງມືວຽກງານຖະແຫຼງຂ່າວ, ການອອກຂ່າວ ໃຫ້ເປັນທັນສະໄໝດ້ວຍຫຼາຍຊ່ອງທາງ; ຜ່ານການຈັດຕັ້ງປະຕິບັດ ສາມາດເຮັດໃຫ້ການອອກຂ່າວທັນການກວ່າເກົ່າ ແລະ ຕິຖອຍເປັນກ້າວໆບັນດາສື່ ສັງຄົມທີ່ອອກຂ່າວບິດເບືອນຄວາມຈິງ, ສ້າງຄວາມປັ່ນປ່ວນໃນສັງຄົມ, ໃສ່ຮ້າຍປ້າຍສີ ແລະ ທັບຖົມໂຈມຕີພັກ-ລັດ ເຮົາ.

5. ສາມາດສ້າງຄອບຄົວພົ້ນທຸກໄດ້ 31,232 ຄອບຄົວ ກວມ 89.23% ຂອງຄາດໝາຍທີ່ກໍານົດໄວ້ (ຄາດໝາຍສູ້ຊົນ 35,000 ຄອບຄົວ), ສ້າງບ້ານພົ້ນທຸກໄດ້ 271 ບ້ານ ກວມ 54.20% ຂອງຄາດໝາຍທີ່ກໍານົດໄວ້ (ຄາດໝາຍສູ້ຊົນ 500 ບ້ານ), ສ້າງເມືອງພົ້ນທຸກໄດ້ 8 ເມືອງ ກວມ 53.33% ຂອງຄາດໝາຍທີ່ກໍານົດໄວ້ (ຄາດໝາຍສູ້ຊົນ 15 ເມືອງ); ສ້າງຄອບຄົວພັດທະນາໄດ້ 46,09 ຄອບຄົວ ກວມ 139,69% ປະຕິບັດໄດ້ລື່ນຄາດໝາຍ (ຄາດໝາຍສູ້ຊົນ 33,000 ຄອບຄົວ), ສ້າງບ້ານພັດທະນາໄດ້ 390 ບ້ານ ກວມ 78% ຂອງຄາດໝາຍທີ່ກໍານົດໄວ້ (ຄາດໝາຍສູ້ຊົນ 500 ບ້ານ); ສ້າງບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດໄດ້ 22 ຈຸດ; ຈັດສັນທີ່ຢູ່ອາໄສໃຫ້ປະຊາຊົນໄດ້ 497 ຄອບຄົວກວມ 114.78% ຂອງຄາດໝາຍສູ້ຊົນທີ່ກໍານົດໄວ້ (ຄາດໝາຍສູ້ຊົນ 433 ຄອບຄົວ); ຈັດສັນທີ່ດິນທໍາການຜະລິດ ໃຫ້ປະຊາຊົນໄດ້ 849 ຄອບຄົວ ກວມ 73.44% ຂອງຄາດໝາຍສູ້ຊົນທີ່ກໍານົດໄວ້ (ຄາດໝາຍສູ້ຊົນ 1,15 ຄອບຄົວ).

# ເກັບກູ້ໜີ້ສິນຄືນໄດ້ 631 ຕື້ກີບ ເທົ່າກັບ 25%ຂອງແຜນປີ



(ສພຊ) - ທ່ານ ສັນຕິພາບ ພົມວິຫານ ລັດຖະມົນຕີກະຊວງການເງິນ ໄດ້ຊີ້ແຈງຕໍ່ຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດ ໃນວາລະກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ ຊຸດທີ IX ໂດຍສະເພາະຄວາມຄືບໜ້າການປະຕິບັດແຜນ ການລົງທຶນຂອງລັດປະຈຳປີ 2025 ເປັນຕົ້ນການຈັດສັນງົບປະມານບ້ວງກອງທຶນທາງ ແລະ ການເກັບໜີ້ສິນ ເຊິ່ງທ່ານໄດ້ຊີ້ແຈງວ່າ:

ຕາມມະຕິສະພາແຫ່ງຊາດໄດ້ຮັບຮອງແຜນການລົງທຶນຂອງລັດປະຈຳປີ 2025 ລວມທັງໝົດ 24,550 ຕື້ກີບ (ລົງທຶນຈາກຕ່າງປະເທດ 18,300 ຕື້ກີບ ແລະ ລົງທຶນພາຍໃນ 6,250 ຕື້ກີບ). ກະຊວງການເງິນໄດ້ຮີບຮ້ອນແຈ້ງແຜນການລົງທຶນ ແລະ ບັນຊີໂຄງການລະອຽດໃຫ້ບັນດາກະຊວງ, ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ໃນເດືອນພະຈິກ 2024 (ບໍ່ລວມກອງທຶນທາງ 800 ຕື້ກີບ) ເພື່ອເປັນພື້ນຖານໃນການຈັດຕັ້ງປະຕິບັດ; ຮອດປັດຈຸບັນ ປະຕິບັດໄດ້25%ຂອງແຜນການປີເປັນເງິນ 6,094 ຕື້ກີບ ໃນນັ້ນ, ລົງທຶນຕ່າງປະເທດ22% ເປັນເງິນ 4,091ຕື້ກີບ(ເປັນການສະຫຼຸບການປະຕິບັດງວດ I) ແລະ ລົງທຶນພາຍໃນ 32% ເປັນເງິນ 2,003 ຕື້ກີບ. ການຈັດຕັ້ງປະຕິບັດວຽກຕົວຈິງແມ່ນມີຄວາມຄືບໜ້າຫຼາຍແຕ່ອັດຕາສ່ວນການຊຳລະຍັງຕ່ຳ ເນື່ອງຈາກຂະແໜງການທີ່ກ່ຽວຂ້ອງຕ່າງໆ ຍັງບໍ່ທັນປະກອບເອກະສານເພື່ອຂໍເບີກຈ່າຍຕາມໜ້າວຽກ; ທິດທາງແກ້ໄຂໃນຕໍ່ໜ້າ, ກະຊວງການເງິນຈະໄດ້ສືບຕໍ່ຄົ້ນຄວ້າ, ປັບປຸງຂັ້ນຕອນ ແລະ ກົນໄກການຈັດຕັ້ງປະຕິບັດຄືນໃໝ່.

ສຳລັບບ້ວງກອງທຶນທາງຈຳນວນ 800 ຕື້ກີບ ມາຮອດຕົ້ນເດືອນມິຖຸນາ ໄດ້ຮັບການສະເໜີຈາກກະຊວງໂຍທາທິການ ແລະ ຂົນສົ່ງ ລວມມີ 694 ໂຄງການ ໃນນັ້ນ, ສາມາດສ້າງເປັນແຜນການລົງທຶນ ແລະ ລາຍງານລັດຖະບານພິຈາລະນາ614 ໂຄງການ ມູນຄ່າ 452.83 ຕື້ກີບ, ສ່ວນທີ່ຍັງເຫຼືອ 80 ໂຄງການມູນຄ່າ 347.17 ຕື້ກີບ ທີ່ເປັນໂຄງການໃໝ່ ຍັງບໍ່ສາມາດຄົ້ນຄວ້າສ້າງແຜນການລົງທຶນຂອງລັດໄດ້ ເນື່ອງຈາກການປະກອບເອກະສານຍັງບໍ່ຄົບຖ້ວນຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ; ບັນຫາທີ່ຕິດພັນກັບການຈັດສັນງົບປະມານກອງທຶນທາງຍັງມີຄວາມຊັກຊ້າ ເນື່ອງຈາກສ່ວນຫຼາຍແມ່ນໂຄງການຟື້ນຟູຫຼັງລະດູຝົນ, ເດືອນ 10-11 ແຕ່ລະປີ ຈຶ່ງສາມາດເກັບກຳຜົນເສຍຫາຍມາປະເມີນມູນຄ່າສ້ອມແປງ ແລ້ວຈຶ່ງຄົ້ນຄວ້າກຳນົດເປັນໂຄງການ ເຊິ່ງເກີນໄລຍະເວລາຂອງການສ້າງແຜນລົງທຶນ.

ການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດແບບມີສ່ວນຫຼຸດ: ໃນປີນີ້, ລັດຖະບານໄດ້ເຫັນດີແກ້ໄຂມູນຄ່າປະມານ 800 ຕື້ກີບ ເຊິ່ງປັດຈຸບັນກຳລັງຄົ້ນຄວ້າຫຼັກການ, ເງື່ອນໄຂ ແລະ ຂັ້ນຕອນລະອຽດ ເພື່ອຈະໃຫ້ສາມາດຈັດຕັ້ງປະຕິບັດໄດ້ໃນ 6 ເດືອນທ້າຍປີ.

ການຊຳລະໜີ້ສິນທັງພາຍໃນ ແລະ ຕ່າງປະເທດ ສາມາດປະຕິບັດໄດ້ພຽງ13.54%ຂອງແຜນການປີ ເປັນພຽງຕົວເລກສະເພາະແຕ່ການຊຳລະໜີ້ສິນພາຍໃນທີ່ໄດ້ຊຳລະຕົວຈິງໃນໄລຍະ 5ເດືອນຕົ້ນປີ, ຖ້າທຽບໃສ່ການຊຳລະໜີ້ສິນທັງພາຍໃນ ແລະ ຕ່າງປະເທດທັງໝົດສາມາດປະຕິບັດໄດ້ 22.54% ຂອງແຜນປີ ຫຼື ເທົ່າກັບ 64.94% ຂອງແຜນ 6 ເດືອນຕົ້ນປີ ເປັນເງິນປະມານ 13,796 ຕື້ກີບ; ຄາດຄະເນຈະສາມາດຊຳລະໜີ້ສິນໃນ6ເດືອນຕົ້ນປີໄດ້33.54% ຂອງແຜນປີຫຼືເທົ່າກັບ96.61% ຂອງແຜນ 6 ເດືອນຕົ້ນປີ ເປັນເງິນ 20,525 ຕື້ກີບ. ການຊຳລະໜີ້ສິນ ສາມາດປະຕິບັດໄດ້ຕາມແຜນແລ້ວຖ້າທຽບໃສ່ແຜນ 6 ເດືອນຕົ້ນປີ, ແຕ່ຖ້າທຽບໃສ່ແຜນໝົດປີເຫັນວ່າຍັງປະຕິບັດໄດ້ຕ່ຳ ເນື່ອງຈາກພັນທະໜີ້ສິນສ່ວນໃຫຍ່ຈະຄົບກຳນົດຊຳລະໃນໄລຍະ 6 ເດືອນທ້າຍປີ ແລະ ຜູ້ຖືຄອງພັນທະບັດຈຳນວນໜຶ່ງຍັງບໍ່ທັນໄດ້ປະກອບເອກະສານຄົບຖ້ວນເພື່ອໄຖ່ຖອນພັນທະບັດພາຍໃນທີ່ຄົບກຳນົດຊຳລະ.

ສາມາດເກັບກູ້ໜີ້ສິນຄືນໄດ້ 631 ຕື້ກີບ ເທົ່າກັບ 25% ຂອງແຜນປີ (2,500 ຕື້ກີບ), ໃນນີ້ (1) ເກັບຄືນເງິນກູ້ຢືມຕໍ່ຈາກລັດວິສາຫະກິດ ປະມານ 537 ຕື້ກີບ, (2) ເກັບຄືນໜີ້ເສຍຈາກ 2 ທະນາຄານ 86 ຕື້ກີບ (ສະເພາະຕົ້ນທຶນ) ແລະ(3) ຄ່າທຳນຽມການອອກຄ້ຳປະກັນ 8 ຕື້ກີບ; ຄາດຄະເນໝົດປີຈະສາມາດຈັດຕັ້ງປະຕິບັດໄດ້ພຽງແຕ່ 50% ຂອງແຜນການປີ ເນື່ອງຈາກບາງລັດວິສາຫະກິດບໍ່ສາມາດເກັບກູ້ໄດ້ຕາມແຜນການທີ່ກຳນົດ ເປັນຕົ້ນ: ລັດວິສາຫະກິດໄຟຟ້າລາວ (ຟຟລ). ທິດທາງແກ້ໄຂໃນຕໍ່ໜ້າ, ຈະລົງຕິດຕາມກວດກາຕົວຈິງ ແລະ ຊຸກຍູ້ການຈັດຕັ້ງປະຕິບັດການເກັບຄືນເງິນກູ້ຢືມຕໍ່ຢ່າງເຂັ້ມງວດ ແລະ ເປັນປົກກະຕິ ໂດຍສະເພາະ ຟຟລ ທີ່ໄດ້ປັບປຸງໂຄງສ້າງລາຄາໄຟຟ້າຄືນໃໝ່ໃນແຕ່ລະໄລຍະ ເຊິ່ງຈະເປັນພື້ນຖານໃນການປັບໂຄງສ້າງໜີ້ສິນຂອງ ຟຟລ ທີ່ມີຕໍ່ກະຊວງການເງິນ ເພື່ອກ້າວໄປສູ່ການປັບປຸງຖານະການເງິນຂອງ ຟຟລ ໃຫ້ດີຂຶ້ນ ແລະ ເປັນເງື່ອນໄຂໃຫ້ສາມາດຊຳໜີ້ສິນກູ້ຢືມຕ່າງປະເທດໂດຍກົງ ແລະ ກູ້ຢືມຕໍ່ລັດຖະບານ.

# ຍົກເລີກໃບອະນຸຍາດລົງທຶນ 31 ບໍລິສັດ ທີ່ດຳເນີນໂຄງການຂຸດຄົ້ນຄຳຕົກຂ້ອນ

(ສພຊ) - ວັນທີ 10 ມິຖຸນາຜ່ານມາ, ທ່ານ ມະໄລທອງ ກົມມະສິດ ລັດຖະມົນຕີກະຊວງອຸດສາຫະກຳແລະການຄ້າ(ອຄ) ໄດ້ຊີ້ແຈງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ດັ່ງນີ້:



1. ສາເຫດທີ່ລາຄາສິນຄ້າເພີ່ມຂຶ້ນ ໂດຍພື້ນຖານພົວພັນກັບຕົ້ນທຶນການຜະລິດ, ການຈໍລະຈອນສິນຄ້າ, ຄວາມສ່ຽງໃນຕະຫຼາດ, ກຳໄລຜູ້ປະກອບການ ແລະ ການປ່ຽນບາງນະໂຍບາຍ ຫຼື ລະບຽບການທີ່ກ່ຽວຂ້ອງ ຖືກຖ່າຍທອດຜ່ານລາຄາສິນຄ້າ ໄປຍັງຜູ້ຊື້ ຫຼື ຜູ້ຊົມໃຊ້ສຸດທ້າຍ; ໄລຍະຜ່ານມາ, ຂະແໜງອຄ ໄດ້ປະຕິບັດຫຼາຍມາດຕະການຕາມດຳລັດ 474/ນຍ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ໂດຍມີການທົບທວນ ແລະກຳນົດລາຍການສິນຄ້າຕິດຕາມ (ບັນຊີ ຂ) ແລະສິນຄ້າຄວບຄຸມ(ບັນຊີກ) ທັງຄົ້ນຄວ້າປັບປຸງໂຄງປະກອບລາຄາຄືນ ເມື່ອເຫັນວ່າບໍ່ສອດຄ່ອງກັບຄວາມເປັນຈິງ, ນຳເຂົ້າສານໜຽວປະເພດ 2 ຈາກໂຄງການຄັງແຮເຂົ້າ ທີ່ໄດ້ອະນຸມັດໃນໄລຍະຜ່ານມາ ອອກມາແຊກແຊງລາຄາເປັນແຕ່ລະໄລຍະ,ປະຕິບັດນະໂຍບາຍຖົມຊຸມລາຄາບາງລາຍການສິນຄ້າ ເປັນຕົ້ນ: ນ້ຳມັນເຊື້ອໄຟ ໂດຍການຫຼຸດການເກັບພາສີ ແລະ ອັດຕາອາກອນຊົມໃຊ້ລົງ ແລະ ການຈັດກິດຈະກຳຂາຍສິນຄ້າລາຄາຖືກຢູ່ແຕ່ລະທ້ອງຖິ່ນ, ຕິດຕາມ-ກວດກາການຕິດລາຄາສິນຄ້າຄວບຄຸມ ແລະການຂາຍສິນຄ້າໃນທ້ອງຕະຫຼາດ ເພື່ອບໍ່ໃຫ້ຜູ້ຄ້າຂາຍສວຍໂອກາດຂຶ້ນລາຄາຕາມລຳພັງໃຈ, ສົ່ງເສີມການຜະລິດພາຍໃນເພື່ອຫຼຸດຜ່ອນຕົ້ນທຶນການຜະລິດສິນຄ້າ.

ສຳລັບມາດຕະການແກ້ໄຂບັນຫາລາຄາສິນຄ້າໃນຕໍ່ໜ້າ, ຂະແໜງອຸດສາຫະກຳ ແລະການຄ້າ ຈະສົມທົບກັບພາກສ່ວນກ່ຽວຂ້ອງ ລົງເລິກຄົ້ນຄວ້າ ແລະຮ່ວມກັນແກ້ໄຂແຕ່ລະຂອດຂອງຕ່ອງໂສ້ການຜະລິດ ແລະ ການສະໜອງ ໂດຍສະເພາະສິນຄ້າທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ໃນ 3 ຂອດ:

- ຂອດຕົ້ນນ້ຳ (ການເພີ່ມຜົນຜະລິດ, ຍົກສູງຄຸນນະພາບ ແລະ ຫຼຸດຜ່ອນຕົ້ນທຶນ) ຈະສົ່ງເສີມການຜະລິດ ແລະສະໜອງວັດຖຸດິບ, ແນວພັນ, ແຮງງານ, ແຫຼ່ງທຶນ (ກອງທຶນຜະລິດສິນຄ້າລາວ), ຄ່າໄຟຟ້າ, ການນຳໃຊ້ເຄື່ອງມື, ເຕັກນິກການຜະລິດ, ການຂົນສົ່ງ ແລະ ອື່ນໆ.
- ຂອດກາງນ້ຳ (ການປຸງແຕ່ງ ແລະ ສ້າງມູນຄ່າເພີ່ມ) ຈະຄົ້ນຄວ້າວາງແຜນ ແລະ ສົ່ງເສີມການຮວບຮວມຜົນຜະລິດ ເພື່ອສະໜອງໃຫ້ການປຸງແຕ່ງ; ການສ້າງຄວາມເຂັ້ມແຂງໃຫ້ຈຸນລະວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນກ) ແລະ ຜູ້ປະກອບການຜ່ານການເຝິກອົບຮົມ ເຊັ່ນ: ການນຳໃຊ້ເຕັກໂນໂລຊີການຜະລິດ, ການຄວບຄຸມຄຸນນະພາບການປຸງແຕ່ງ; ສະໜອງແຫຼ່ງທຶນ (ກອງທຶນ ຈນກ ແລະ ທະນາຄານທຸລະກິດ) ເພື່ອສົ່ງເສີມການຜະລິດ ແລະອື່ນໆ.
- ຂອດປາຍນ້ຳ (ການພັດທະນາຕະຫຼາດ) ຈະສົ່ງເສີມການຂາຍ-ການເຂົ້າເຖິງຕະຫຼາດ ດ້ວຍນະໂຍບາຍຕ່າງໆເຊັ່ນ: ນະໂຍບາຍສົ່ງເສີມສິນຄ້າໜຶ່ງເມືອງ-ໜຶ່ງຜະລິດຕະພັນ ເຊິ່ງລັດຖະບານຫາກໍຮັບຮອງຍົກລະດັບຂໍ້ຕົກລົງເປັນດຳລັດ ໃນເດືອນຜ່ານມາ; ເຈ ລະຈາເອົາສິນຄ້າທີ່ມີຄຸນນະພາບ ໄປວາງຂາຍຢູ່ຮ້ານຄ້າທັນສະໄໝ(ກົວກາງມາກ, ມິນິບິກຊີ, ຈິບຟີ+ປຕທ, ເຊເວັນອີເລເວັນ... ເຊິ່ງຜ່ານມາ, ກະຊວງ ອຄ ກໍໄດ້ເຈລະຈາກັບບັນດາຮ້ານດັ່ງກ່າວ ເຊິ່ງໄດ້ຮັບການຮ່ວມມືທີ່ດີ ແລະ ສືບຕໍ່ເສີມຂະຫຍາຍ); ຈັດຕະຫຼາດນັດສິນຄ້າລາຄາຖືກ ຢູ່ສູນກາງ ແລະ ທ້ອງຖິ່ນ; ສ້າງຄວາມຮັບຮູ້ ແລະ ສົ່ງເສີມການຂາຍສິນຄ້າ ຜ່ານທາງເອເລັກໂຕຼນິກ ເພື່ອຫຼຸດຂອດພໍ່ຄ້າຄົນກາງ.

2. ເຫດຜົນຕົ້ນຕໍໃນການສະເໜີຂຶ້ນລາຄາໄຟຟ້າ: 1) ລາຄາໄຟຟ້າໃນໄລຍະຜ່ານມາ ແລະ ປັດຈຸບັນ ແມ່ນຂາຍຕ່ຳກວ່າຕົ້ນທຶນຜະລິດແລະຈຳໜ່າຍ, ພາໃຫ້ເກີດໜີ້ສະສົມນັບມື້ນັບຫຼາຍຂຶ້ນ; 2) ບໍລິສັດໄຟຟ້າລາວ (ຟຟລ) ມີໜີ້ສະສົມທັງຕົ້ນແລະດອກທີ່ເກີດຈາກຄວາມຈຳເປັນໃນການພັດທະນາພື້ນຖານໂຄງລ່າງ ແລະ ໂຄງການປົ່ນອ້ອມເພື່ອການຜະລິດ, ການສະໜອງ, ການບຳ ລຸງຮັກສາ ແລະ ການດຳເນີນການ; 3) ການປັບຂຶ້ນລາຄາໄຟຟ້າແບບຂັ້ນເທື່ອລະຂັ້ນ ເປັນແຜນໄລຍະ4ປີແຕ່2025-2029 ຈະເປັນການສົ່ງສັນຍານທີ່ດີໃຫ້ແກ່ການບໍລິຫານ-ຈັດການໜີ້ສິນ, ການສ້າງຄວາມໜ້າເຊື່ອຖືຕໍ່ຄວາມສາມາດໃນການຊຳລະໜີ້ແລະເປັນເງື່ອນໄຂໃຫ້ແກ່ການເຈລະຈາກັບເຈົ້າໜີ້ໃນຕໍ່ໜ້າ; 4) ການທີ່ບໍ່ສາມາດປັບຂຶ້ນລາຄາໄຟຟ້າ ຈະເຮັດໃຫ້ບັນຫາທີ່ຫ້ອນໂຮມມາ ຍາວນານຍິ່ງໜັກໜ່ວງໄປໜ້າ.

ທິດທາງ ແລະ ມາດຕະການແກ້ໄຂ: ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຕິດຕາມ ແລະ ຮັບຟັງຄຳຄິດຄຳເຫັນຂອງ ສສຊ ຢ່າງເອົາໃຈໃສ່ ແລະ ຈະຮັບເອົາຄຳຄິດຄຳເຫັນທີ່ຍົກຂຶ້ນໄປຄົ້ນຄວ້າໃນຂະບວນການປະເມີນທີ່ກຳລັງດຳເນີນຢູ່ ເພື່ອລາຍງານລັດຖະບານເປັນຕົ້ນ: 1)ເຈລະຈາສັນຍາຊື້-ຂາຍໄຟຟ້າກັບຜູ້ຜະລິດ ແລະຜູ້ຊື້ໄຟຟ້ານຳບໍລິສັດໄຟຟ້າລາວເພື່ອທາງອອກທີ່ຍືນຍົງຮ່ວມກັນ; 2) ປັບປຸງປະສິດທິພາບແລະຄວາມໂປ່ງໃສຂອງການບໍລິຫານ, ຫຼຸດຜ່ອນລາຍຈ່າຍທີ່ບໍ່ຈຳເປັນ ແລະ ຫຼຸດການສູນເສຍທາງດ້ານເຕັກນິກ (ພະລັງງານຕົກເຮ່ຍ) ໃຫ້ດີກວ່າເກົ່າ; 3) ຂຸດຄົ້ນແຫຼ່ງລາຍຮັບເພີ່ມຂອງ ຟຟລ ໃຫ້ໄວຂຶ້ນ ໂດຍເລັ່ງຊຸກຍູ້ການ ຈັດຕັ້ງປະຕິບັດໂຄງການລົງທຶນ ແລະ ໂຄງການຮ່ວມມືທີ່ມີປະສິດທິຜົນສູງໃຫ້ສຳເລັດໄວຂຶ້ນ; 4) ສືບຕໍ່ຄົ້ນຄວ້າ ແລະ ສະເໜີລັດຖະບານ ປັບປຸງນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອເລັ່ງສົ່ງເສີມການຜະລິດພະລັງງານທາງ

ອ່ານຕໍ່ໜ້າ 5

# ສະຖຽນລະພາບເງິນຕາ ແລະ ການເຂົ້າເຖິງແຫຼ່ງທຶນ



(ສພຊ) - ຕອນບ່າຍວັນອັງຄານທີ 10 ມິຖຸນາຜ່ານມາ, ທ່ານນາງວັດທະນາດາລາລອຍ ຮັກສາການຜູ້ວ່າການທະນາຄານແຫ່ງ ສປປລາວ (ທຫລ) ໄດ້ຊີ້ແຈງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ IX ໂດຍສະເພາະສະຖຽນລະພາບເງິນຕາ ແລະ ການເຂົ້າເຖິງແຫຼ່ງທຶນ.

1. ຕະຫຼາດແລກປ່ຽນເງິນຕາຕ່າງປະເທດ (ຕລຕ) ໄດ້ສ້າງຕັ້ງຂຶ້ນໃນເດືອນ8/2024, ເບື້ອງຕົ້ນ ໄດ້ເປີດໃຫ້ບໍລິການວັນຈັນ-ສຸກເວລາ9:00-14:00 ໂມງ ໃນວົງເງິນ 1,000 ໂດລາ/ມື້ສຳລັບບຸກຄົນແລະ50,000 ໂດລາ/ມື້ສຳລັບນິຕິບຸກຄົນ, ເປັນຕະຫຼາດທີ່ສ້າງຕັ້ງຂຶ້ນສອດຄ່ອງກັບກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບປັບປຸງປີ2022; ມາຮອດເດືອນ 3/2025, ທຫລ ໄດ້ຂະຫຍາຍຂອບເວລາເປັນ 9:00-15:00 ໂມງ ໃນວົງເງິນ 2,000 ໂດລາ/ມື້ສຳລັບບຸກຄົນແລະ75,000 ໂດລາ/ມື້ ສຳລັບນິຕິບຸກຄົນ ບໍ່ຈຳກັດວົງເງິນຕໍ່ເດືອນ; ໃນເດືອນ 5/2025 ປະລິມານຊື້-ຂາຍເພີ່ມຂຶ້ນຮອດ 718.57% ເມື່ອທຽບກັບເດືອນ 8/2024 ກວມອັດຕາສ່ວນ 6-10% ຂອງການຊື້-ຂາຍເງິນຕາຕ່າງປະເທດທັງໝົດໃນລະບົບເສດຖະກິດ ເຮັດໃຫ້ອັດຕາແລກປ່ຽນຈາກເດືອນ7/2024 ທີ່ເງິນກີບທຽບໂດລາອ່ອນຄ່າ 22,161 ກີບ/ໂດລາ ມາເປັນ 21,522 ກີບ/ໂດລາ ແລະ ເງິນກີບທຽບບາດທີ່ອ່ອນຄ່າ 690 ກີບ/ບາດ ມາເປັນ 654.97 ກີບ/ບາດ ໃນເດືອນ 5/2025, ອັດຕາແລກປ່ຽນລະຫວ່າງອັດຕາທາງການ (ທທກ) ແລະອັດຕາບໍ່ເປັນທາງການ(ອັດຕາຕະຫຼາດມືດ) ຫຍັບເຂົ້າໃກ້ກັນ ຫຼື ບາງມື້ ອັດຕາ ທທກ ສູງກວ່າຕະຫຼາດນອກລະບົບ ເຊິ່ງໃນເດືອນພຶດສະພານີ້ສ່ວນຕ່າງຫຍັບແຄບເຂົ້າເປັນ 0.29% ກີບ/ໂດລາ ຈາກ 17.28% ໃນເດືອນ 7/2024 ແລະກີບ/ບາດ ຫຍັບເຂົ້າໃກ້ກັນເປັນ 0.34% ຈາກ 4.70% ໃນເດືອນ 7/2024 ຫຼື ເວົ້າອີກຢ່າງໜຶ່ງ ອັດຕາແລກປ່ຽນເກືອບເປັນອັດຕາດຽວກັນທົ່ວລະບົບຕະຫຼາດເງິນຕາຕ່າງປະເທດ. ສຳລັບທິດທາງໃຫ້ບໍລິການຂອງ ຕລຕ ໃນຕໍ່ໜ້າຈະຄົ້ນຄວ້າການຂະຫຍາຍວັນເປີດບໍລິການ ຈາກ ວັນຈັນ-ສຸກມາເປັນ ວັນຈັນ-ອາທິດ ເຊິ່ງຈະອຳນວຍຄວາມສະດວກໃຫ້ແກ່ບໍລິການລູກຄ້າທີ່ຍັງມີຄວາມຈຳເປັນນຳໃຊ້ເງິນຕາຕ່າງປະເທດ ແລະ ຫຼຸດຊ່ອງວ່າງການເຂົ້າຫາຕະຫຼາດນອກລະບົບໃຫ້ແຄບລົງ.

2. ເພື່ອຕິດຕາມບັນດາຂໍ້ຫຍຸ້ງຍາກໃນການເຂົ້າເຖິງສິນເຊື່ອຂອງຈຸນລະວິສາຫະກິດ, ທຫລ ຈະສືບຕໍ່ປະສານສົມທົບກັບຄະນະຮັບຜິດຊອບຂັ້ນແຂວງຢ່າງປົກກະຕິ ພ້ອມທັງຕິດຕາມ ແລະ ຊຸກຍູ້ໃຫ້ທະນາຄານທຸລະກິດ ເຜີຍແຜ່ຂໍ້ມູນ ແລະ ຊອກຫາລູກຄ້າທີ່ນອນໃນເປົ້າໝາຍຕາມຂໍ້ຕົກລົງເຂົ້າຮ່ວມໂຄງການນະໂຍບາຍສິນເຊື່ອດັ່ງກ່າວ, ເພີ່ມທະວີວຽກງານໂຄສະນາ-ປະຊາສຳພັນ ລົງເຄື່ອນໄຫວເຜີຍແຜ່ຂໍ້ມູນຂ່າວສານໃຫ້ຜູ້ປະກອບການເຂົ້າໃຈຢ່າງເລິກເຊິ່ງ, ສືບຕໍ່ຂຶ້ນແຜນລົງເຄື່ອນໄຫວວຽກງານຂອງຄະນະຮັບຜິດຊອບສິນເຊື່ອ ເພື່ອຕິດຕາມສະພາບ ແລະ ຊຸກຍູ້ການນຳໃຊ້ເງິນກູ້ຂອງຫົວໜ່ວຍທຸລະກິດທີ່ໄດ້ຮັບແຫຼ່ງທຶນໄປແລ້ວ (ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ)/ຫົວໜ່ວຍທຸລະກິດທີ່ໄດ້ຮັບການສົມທົບດອກເບ້ຍ (ນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ) ໃຫ້ເກີດປະສິດທິຜົນໃນການຜະລິດສິນຄ້າ ແລະ ການບໍລິການ, ສືບຕໍ່ທົບທວນປະເມີນຜົນການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນໃນແຕ່ລະໄລຍະໃຫ້ໄດ້ຮັບຜົນດີລວມທັງການເກັບກູ້ໜີ້ສິນເງິນກູ້ຂອງນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ແລະ ສືບຕໍ່ຄົ້ນຄວ້າຕາມການສະເໜີຂໍເຂົ້າຮ່ວມນະໂຍບາຍສິນເຊື່ອຂອງຫົວໜ່ວຍທຸລະກິດ ໂດຍຜ່ານການສະເໜີຂອງທະນາຄານທຸລະກິດໃນແຕ່ລະໄລຍະ ເພື່ອລາຍງານຄະນະຮັບຜິດຊອບພິຈາລະນາມີຄຳເຫັນຮ່ວມກັນ.

3. ເພື່ອແກ້ໄຂບັນຫາການເຂົ້າເຖິງແຫຼ່ງທຶນຂອງ SME ມີຄວາມຫຍຸ້ງຍາກ, ທຫລ ໄດ້ແຕ່ງຕັ້ງຄະນະເພື່ອຄົ້ນຄວ້າຍຸດທະສາດນະໂຍບາຍສິນເຊື່ອຮອດປີ2030 ໃນວັນທີ20 ມັງກອນຜ່ານມາ (ຮອງຜູ້ວ່າການ ທຫລ ເປັນຫົວໜ້າ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ວິຊາການຂອງກົມກ່ຽວຂ້ອງຂອງ ທຫລ) ມີໜ້າທີ່ທົບທວນຕີລາຄາຄືນການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອໃນໄລຍະຜ່ານມາ, ກຳນົດທິດທາງນະໂຍບາຍໃນການແກ້ໄຂບັນຫາຕິດພັນກັບສິນເຊື່ອທັງໝົດໃນຕໍ່ໜ້າໄປຄຽງຄູ່ກັບກັບການຄົ້ນຄວ້າລະດັບສິນເຊື່ອ ແລະ ກຳນົດເປົ້າໝາຍສິນເຊື່ອໃຫ້ສອດຄ່ອງກັບສະພາບເສດຖະກິດໃນແຕ່ລະໄລຍະພ້ອມທັງປັບປຸງສະພາບແວດລ້ອມ ແລະ ເຄື່ອງມືເພື່ອສະໜັບສະໜູນໃຫ້ແກ່ການເຂົ້າເຖິງສິນເຊື່ອຂອງ SME ແລະ ຮັບປະກັນລະດັບໜີ້ສິນທີ່ບໍ່ເກີດດອກອອກຜົນ ໃຫ້ຢູ່ໃນລະດັບທີ່ຮັບປະກັນ.





## ປະດັບຫຼຽນ...

(ຕໍ່ຈາກໜ້າ 1)

ຕັ້ງພັກປະຊາຊົນປະຕິວັດລາວ ສະບັບເລກທີ441/ຄລສພ, ລົງວັນທີ 14/3/2025 ໃຫ້ສະມາຊິກພັກສະພາແຫ່ງຊາດທີ່ມີຜົນງານ, ຄຸນງາມຄວາມດີ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕະຫຼອດໄລຍະຜ່ານມາຈຳນວນທັງໝົດ 49 ສະຫາຍ, ໃນນີ້ ສະມາຊິກພັກບຳນານ 27 ສະຫາຍ ຍິງ 7 ສະຫາຍ, ສະມາຊິກພັກປະຈຳການ 22 ສະຫາຍ ຍິງ 4 ສະຫາຍ. ຈາກນັ້ນ, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ປະດັບຫຼຽນກາລະນຶກໃຫ້ສະມາຊິກພັກທີ່ໄດ້ຮັບຫຼຽນ 70 ປີ ຂອງພັກ ຂັ້ນຄະນະປະຈຳ ແລະ ອະດີດຄະນະປະຈຳສະພາແຫ່ງຊາດ; ສະຫາຍ ຄຳໃບ ດຳລັດ ປະດັບຫຼຽນກາລະນຶກໃຫ້ສະມາຊິກພັກທີ່ໄດ້ຮັບຫຼຽນ 70 ປີ ຂອງພັກ ຂັ້ນຮອງປະທານແລະອະດີດຮອງປະທານກຳມາທິການສະພາແຫ່ງຊາດ ແລະ ທຽບເທົ່າ, ຂັ້ນກົມ ແລະ ທຽບເທົ່າ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# DSK ແລະ ທະນາຄານການຄ້າຕ່າງປະເທດລາວ ຊຸກຍູ້ກອງປະຊຸມສະໄໝສາມັນເທື່ອທີ 9



(ສພຊ) - ວັນທີ 10-11 ມິຖຸນາຜ່ານມາ, ກຸ່ມບໍລິສັດ DSK ຈຳກັດ ໄດ້ມອບນ້ຳດື່ມແຮ່ທາດ ມີນີໂຣ ພີມ້ຽມ ຈຳນວນ 250 ແພັກ ລວມມູນຄ່າ 50 ລ້ານກີບ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ມອບເງິນສົດ 30 ລ້ານກີບ ເພື່ອປະກອບສ່ວນຊຸກຍູ້ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX, ຕາງໜ້າ ມອບໂດຍນາງພອນສະຫວັນ ແສນບຸດຕະລາດ ຫົວໜ້າຫ້ອງການກຸ່ມບໍລິສັດ DSK ຈຳກັດແລະທ່ານ ກົງສັກສຸ ພອນສີ ຮອງຜູ້ອຳນວຍການທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ຕາງໜ້າຮັບໂດຍທ່ານປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ ເຊິ່ງມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ທ່ານ ອາຄົມ ປຣະເສີດ ໄດ້ສະແດງຄວາມຂອບໃຈ ແລະ ມອບໃບຍ້ອງຍໍຂອງຄະນະເລຂາທິການສະພາແຫ່ງຊາດໃຫ້2ພາກສ່ວນທີ່ມີຜົນງານດີເດັ່ນໃນການປະກອບສ່ວນອຸປະຖຳໃນຄັ້ງນີ້.



## ຍົກເລີກ...

(ຕໍ່ຈາກໜ້າ 3)

ເລືອກສະໜອງໃຫ້ແກ່ການຊົມໃຊ້ພາຍໃນ (ຕົວຢ່າງ: ໂອກາດໃນການນຳໃຊ້ຖານການຜະລິດແຜງໂຊລາ ຢູ່ເຂດເສດຖະກິດພິເສດໄຊເສດຖາກວມລວມ ເພື່ອສະໜອງໃຫ້ແກ່ໂຄງການໄຟຟ້າແສງຕາເວັນ ແລະ ເຄື່ອງໃຊ້ໄຟຟ້າຈາກແຜງໂຊລາ); 5) ການບໍລິຫານ-ຈັດການ ການຜະລິດ, ການຊື້ ແລະ ການສະໜອງໄຟຟ້າ ໃຫ້ມີປະສິດທິພາບ-ປະສິດທິຜົນກວ່າເກົ່າ, ແກ້ໄຂບັນຫາຊື້ແພງ-ຂາຍຖືກ, ຊື້ແຕ່ບໍ່ໄດ້ໃຊ້, ມີໄຟແຕ່ບໍ່ສ້າງລາຍຮັບໄດ້ແລະອື່ນໆ; 6) ຄົ້ນຄວ້າ ແລະ ສະເໜີລັດຖະບານ ຊ່ວຍເຫຼືອບາງນະໂຍບາຍທີ່ມີຄວາມຈຳເປັນ ເຊັ່ນ: ການມອບສິດໃຫ້ ຟຟລ ຫຼື ບໍລິສັດຖືຮຸ້ນລາວ ພັດທະນາໂຄງການພະລັງງານຈາກຖ່ານຫີນ ເພື່ອສະໜອງໃຫ້ແກ່ການຜະລິດ ແລະ ຊົມໃຊ້ພາຍໃນ; 7) ຄົ້ນຄວ້າ, ສຶກສາຄວາມເປັນໄປໄດ້ ແລະເຈລະຈາຂໍການສະໜັບສະໜູນຈາກສາກົນ ເປັນຕົ້ນ ເຈົ້າໜີ້ ຫຼື ສະຖາບັນການເງິນໃໝ່ ເພື່ອບໍລິຫານໜີ້ສິນ,ປັບໂຄງສ້າງຂຶ້ນ ແລະ ຫຼຸດຜ່ອນພາລະໜັກໜ່ວງຈາກການຊອກຫາແຫຼ່ງທຶນມາຊຳລະໜີ້; 8.) ທົບທວນ, ຄົ້ນຄວ້າ ແລະ ປັບປຸງ ຍຸດທະສາດການພັດທະນາພະລັງງານໄຟຟ້າຂອງສປປລາວຮອດປີ2030 ທີ່ສະພາແຫ່ງຊາດໄດ້ຮັບຮອງໃນປີ2021 ເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ທ່າອຽງການພັດທະນາທີ່ມີການປ່ຽນແປງໃນໄລຍະ 4 ປີຜ່ານມາ.

3. ວຽກງານບໍ່ແຮ່

ໃນໄລຍະຜ່ານມາ, ຂະແໜງບໍ່ແຮ່ໄດ້ປະເມີນບັນດາໂຄງການລົງທຶນດ້ານບໍ່ແຮ່ດັ່ງນີ້:

- ປີ 2023 ໄດ້ປະເມີນ 110 ບໍລິສັດ, 202 ກິດຈະການ ໃນນີ້, ໄດ້ປະເພດ C+ (ອ່ອນ) 22 ບໍລິສັດ ແລະ ໄດ້ປະເພດ C (ອ່ອນຫຼາຍ) 30 ບໍລິສັດ, ໃນນີ້ 8 ບໍລິສັດ ບໍ່ມີການເຄື່ອນໄຫວ;

- ປີ 2024 ເຖິງປັດຈຸບັນ ໄດ້ສຳເລັດການລົງກວດກາເກັບກຳຂໍ້ມູນພາກສະໜາມແລະກຳລັງຢູ່ໃນຂັ້ນຕອນດຳເນີນການສັງລວມ ແລະປະເມີນຜົນ ໂດຍສະເພາະແມ່ນຈະສຸມໃສ່ບັນດາໂຄງການທີ່ນອນຢູ່ໃນປະເພດ C ໃນປີຜ່ານມາ.

ການດຳເນີນການຫຼັງການປະເມີນ:

-ບໍລິສັດທີ່ຖືກຈັດຢູ່ໃນປະເພດ C+ ແມ່ນໄດ້ອອກແຈ້ງເຕືອນ ພ້ອມທັງຮຽກເຊີນບໍລິສັດມາປຶກສາຫາລື ແລະ ສ້າງບົດບັນທຶກ ເພື່ອກຳນົດເວລາ ແລະ ວິທີການແກ້ໄຂຕາມແຕ່ລະກໍລະນີ ເພື່ອຊຸກຍູ້ໃຫ້ບັນດາບໍລິສັດດັ່ງກ່າວ ສາມາດປະຕິບັດວຽກງານຂອງຕົນໄດ້ຕາມສັນຍາ ແລະ ແຜນທີ່ກຳນົດໄວ້; ບໍລິສັດໃດແກ່ຍາວ, ບໍ່ປະຕິບັດຕາມແຈ້ງເຕືອນແລະບົດບັນທຶກ ກະຊວງຈະໂຈະແລະຖອນໃບອະນຸຍາດຂຸດຄົ້ນ ແລະ ປຸງແຕ່ງ ພ້ອມທັງສະເໜີໃຫ້ກະຊວງແຜນການແລະການລົງທຶນ ໃນນາມຄູ່ສັນຍາ ຍົກເລີກສັນຍາສຳປະທານ.

-ບໍລິສັດທີ່ຖືກຈັດຢູ່ໃນປະເພດ C ມາຮອດປັດຈຸບັນ ມີ 17 ບໍລິສັດ ໄດ້ຖືກເຊີນເຂົ້າມາປະຊຸມປຶກສາຫາລື ແລະສ້າງບົດບັນທຶກກ່າວເຕືອນ ເພື່ອໃຫ້ບໍລິສັດປັບປຸງ ແລະ ແກ້ໄຂຂໍ້ບົກພ່ອງຂອງຕົນ; ຜ່ານມາມີ 1 ບໍລິສັດ ໄດ້ມີການປັບປຸງແກ້ໄຂຂໍ້ບົກພ່ອງແລະ ມີແຜນສືບຕໍ່ດຳເນີນວຽກງານໃນຕໍ່ໜ້າ, ສ່ວນ 7 ບໍລິສັດ ທີ່ບໍ່ມີຄວາມຄືບໜ້າໃນການແກ້ໄຂບັນຫາ, ກະຊວງກຳລັງດຳເນີນຂັ້ນຕອນຍົກເລີກບັນດານິຕິກຳໃນການດຳເນີນກິດຈະການກ່ຽວກັບແຮ່ທາດຂອງບໍລິສັດດັ່ງກ່າວ.

ການແກ້ໄຂໂຄງການພັດທະນາບໍ່ແຮ່ແບບທົດລອງ ແລະ ໂຄງການຂຸດຄົ້ນຄຳຕົກຂ້ອນ: ປັດຈຸບັນ, ໂຄງການພັດທະນາບໍ່ແຮ່ໃນຮູບແບບທົດລອງ ມີ 92 ບໍລິສັດ ໄດ້ຫັນມາເປັນໂຄງການປົກກະຕິແລ້ວ 28 ບໍລິສັດ ແລະ 33 ບໍລິສັດ ຢູ່ໃນໄລຍະການເຈລະຈາສັນຍາ ເພື່ອສືບຕໍ່ເຮັດໃຫ້ສຳເລັດທັງໝົດ; ພ້ອມນີ້, ກໍໄດ້ແຈ້ງສິ້ນສຸດສັນຍາໂຄງການແລະຍົກເລີກໃບອະນຸຍາດລົງທຶນແລ້ວ 31 ບໍລິສັດ ທີ່ດຳເນີນໂຄງການຂຸດຄົ້ນຄຳຕົກຂ້ອນ.

ທິດທາງ ແລະ ມາດຕະການໃນຕໍ່ໜ້າ, ຈະໄດ້ສືບຕໍ່ເອົາໃຈໃສ່ ແລະ ເພີ່ມທະວີຄວາມເຂັ້ມງວດເດັດຂາດ ໃນການປະຕິບັດມະຕິສະພາແຫ່ງຊາດແລະການຊີ້ນຳຂອງລັດຖະບານ ໂດຍຈະ1) ຖອດຖອນບົດຮຽນຈາກຂໍ້ບົກພ່ອງຜ່ານມາ; ທົບທວນ ແລະ ເຈລະຈາປັບປຸງສັນຍາສຳຫຼວດ, ຊອກຄົ້ນ ແລະ ຂຸດຄົ້ນ ທີ່ມີຊ່ອງວ່າງ ເພື່ອຄຸ້ມຄອງການຂຸດຄົ້ນບໍ່ແຮ່ໃຫ້ມີຄວາມຮັດກຸມກວ່າເກົ່າ; 2) ຄົ້ນຄວ້າ ແລະ ສະເໜີປັບປຸງນິຕິກຳ ເພື່ອເພີ່ມການປັບໃໝຕໍ່ຜູ້ລະເມີດສັນຍາ, ນິຕິກຳ ແລະ ລະບຽບການທີ່ກ່ຽວຂ້ອງ ໃຫ້ສູງກວ່າເກົ່າ ທັງບັນຫາທີ່ເປັນຂໍ້ມູນປະຫວັດການເຄື່ອນໄຫວຂອງບໍລິສັດທີ່ມີການລະເມີດລະບຽບການ; 3) ຄົ້ນຄວ້າ ແລະປັບປຸງກົນໄກການປະສານງານໃນວຽກງານປະເມີນຜົນກະທົບຕໍ່ສັງຄົມ ແລະສິ່ງແວດລ້ອມ ໂດຍເພີ່ມທະວີການຮ່ວມມືກັບອົງການປົກຄອງ ແລະ ສະພາປະຊາຊົນທ້ອງຖິ່ນ ໃນການຕິດຕາມ, ກວດກາ ແລະ ສ່ອງແສງການເຄື່ອນໄຫວສຳຫຼວດ, ຊອກຄົ້ນ ແລະຂຸດຄົ້ນບໍ່ແຮ່ທີ່ມີຄວາມສ່ຽງ ຫຼື ສິ່ງຜົນກະທົບໃຫ້ຂະແໜງການຂັ້ນສູນກາງ ແລະ ລັດຖະບານ ເພື່ອແກ້ໄຂບັນຫາຢ່າງທ່ວງທັນ; 4) ສົ່ງເສີມອຸດ ສາຫະກຳປຸງແຕ່ງແຮ່ທາດແບບຍືນຍົງ ສຸມໃສ່ໂຄງການຂະໜາດໃຫຍ່ທີ່ມີທ່າແຮງ ໂດຍສ້າງຕົວແບບການຂຸດຄົ້ນ-ປຸງແຕ່ງແບບເປັນລະບົບຕ່ອງໂສ້ ແລະ ການພັດທະນາເປັນນິຄົມອຸດສາຫະກຳປຸງແຕ່ງແຮ່ທາດ; ຈຳກັດການຂຸດຄົ້ນບໍ່ແຮ່ຂະໜາດນ້ອຍ, ກະແຈກກະຈາຍ ແລະ ບໍ່ກຸ້ມຄ່າທາງດ້ານເສດຖະກິດ ເພື່ອຫຼຸດຄວາມສ່ຽງດ້ານຜົນກະທົບຕໍ່ສິ່ງແວດລ້ອມ; 5) ສ້າງມາດຕະຖານເພື່ອຄັດເລືອກນັກລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ໄດ້ມາດຕະຖານ ແລະຄຸນນະພາບ; ມີກົນໄກກວດຜ່ານ ແລະ ຄັດເລືອກຜູ້ລົງທຶນຢ່າງເປີດ ເຜີຍ, ໂປ່ງໃສ ແລະ ຮັບປະກັນຜົນປະໂຫຍດສູງສຸດຕໍ່ລັດ ແລະ ຕໍ່ປະຊົນ; 6) ທົບທວນນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ແຜນພັດທະນາບໍ່ແຮ່ຄືນໃໝ່ ໂດຍການສະຫຼຸບຕີລາຄາດ້ານດີ, ດ້ານເສຍ, ບົດຮຽນຖອດຖອນໄດ້ ແລະກຳນົດທິດທາງ-ນະໂຍບາຍໃນການນຳໃຊ້ຊັບພະຍາກອນແຮ່ທາດເພື່ອການພັດທະນາແບບຍືນຍົງໃນ 5 ປີຕໍ່ໜ້າ.

4. ຍຸດທະສາດການສະໜອງນ້ຳມັນເຊື້ອໄຟ

ກະຊວງໄດ້ສຳເລັດທິດທາງຍຸດທະສາດເບື້ອງຕົ້ນ, ບາງທິດທາງໄດ້ເລີ່ມດຳເນີນການ ແລະທົດລອງປະຕິບັດ, ແຕ່ບາງທິດທາງແມ່ນຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້, ໃນຂະນະທີ່ບາງທິດທາງ ຍັງຕ້ອງໄດ້ຄົ້ນຄວ້າຊອກການຮ່ວມມືກັບຄູ່ຮ່ວມຍຸດທະສາດ ເພື່ອສຶກສາຄວາມເປັນໄປໄດ້ໃນການພັດທະນາໂຄງການ.

ບາງທິດທາງທີ່ໄດ້ກຳນົດໃນຮ່າງຍຸດທະສາດປະກອບດ້ວຍ: 1)ການສະໜອງນ້ຳມັນເຊື້ອໄຟຈາກຫຼາຍແຫຼ່ງ, 2) ການສ້າງກອງທຶນນ້ຳມັນເຊື້ອໄຟ, 3)ການປັບລາຄານ້ຳມັນ, 4) ປັບປຸງລະບຽບການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ, 5) ປະຕິຮູບລັດວິສາຫະກິດນ້ຳມັນເຊື້ອໄຟລາວ, 6) ສົ່ງເສີມການນຳໃຊ້ລົດໄຟຟ້າ ເພື່ອຫຼຸດຜ່ອນການນຳໃຊ້ນ້ຳມັນເຊື້ອໄຟ, 7) ການສົ່ງເສີມການນຳໃຊ້ທ່າແຮງຂອງທາງລົດໄຟ ເພື່ອຫຼຸດຕົ້ນທຶນການຂົນສົ່ງນ້ຳມັນເຊື້ອໄຟ, 8.) ສົ່ງເສີມການພັດທະນາພະລັງງານທາງເລືອກແບບປະສົມປະສານ (Energy Mix), 9)ສົ່ງເສີມການສ້າງສາງເກັບນ້ຳມັນປອດພາສີຢູ່ໃກ້ຊາຍແດນ, 10) ສົ່ງເສີມການສຶກສາ ແລະສ້າງໂຮງກັ່ນຂະໜາດນ້ອຍ ຫຼື ກາງ ຫຼື ສາງ ຢູ່ເຂດທ່າເຮືອຫວຸ້ງອາງ, 11) ສົ່ງເສີມການຊຳລະສະສາງການຊື້ຂາຍນ້ຳມັນດ້ວຍສະກຸນເງິນກີບ, 12) ສົ່ງເສີມການສຶກສາຄວາມເປັນໄປໄດ້ໃນການສ້າງທໍ່ສົ່ງນ້ຳມັນຈາກແຄມທະເລ ເຂົ້າມາລາວ.

## 6 ເປົ້າໝາຍ...

(ຕໍ່ຈາກໜ້າ 1)

ຮ່າງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ X ໄດ້ລາຍງານການທາບທາມແຜນພັດທະນາເສດຖະກິດສັງຄົມ 5 ປີ ຄັ້ງທີ X (2026-2030) ພາຍໃຕ້ຄຳຂວັນ "ຕັ້ງໜ້າສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ນຳໃຊ້ທຸກທ່າແຮງຢ່າງມີປະສິດທິຜົນ, ພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ ແລະ ຍືນຍົງ" ເຊິ່ງມີ 6 ເປົ້າໝາຍໃຫຍ່ດັ່ງນີ້:

1.ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ດ້ວຍການນຳໃຊ້ທຸກທ່າແຮງບົ່ມຊ້ອນເພື່ອເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມເຂັ້ມແຂງ, ໝັ້ນທ່ຽງ ແລະ ຍືນຍົງ ໂດຍມີ 6 ແຜນວຽກຈຸດສຸມຄື: 1) ນຳໃຊ້ທ່າແຮງບົ່ມຊ້ອນເພື່ອຍູ້ແຮງເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມເຂັ້ມແຂງ ແລະ ມີຄຸນນະພາບສູງຂຶ້ນ; 2) ຄຸ້ມຄອງເສດຖະກິດມະຫາພາກມີຄວາມເຂັ້ມແຂງແລະໝັ້ນທ່ຽງ; 3)ຍົກສູງປະສິດທິພາບການລົງທຶນໃຫ້ມີຄຸນນະພາບແລະມີປະສິດທິຜົນສູງ; 4) ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄປສູ່ຄຸນນະພາບໃໝ່ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ; 5) ພັດທະນາລັດວິສາຫະກິດແລະເສດຖະກິດລວມໝູ່ຂອງປະຊາຊົນມີຄຸນນະພາບ ແລະ ມີຄວາມເຂັ້ມແຂງ; 6)ພັດທະນາເສດຖະກິດດິຈິຕອນໃຫ້ມີຄວາມເຂັ້ມແຂງ ເພື່ອຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວທີ່ຍືນຍົງ.

2. ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ແລະ ຮູ້ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ໂດຍມີ 4 ແຜນວຽກຈຸດສຸມຄື: 1) ພັດທະນາການສຶກສາໃຫ້ມີຄຸນນະພາບ ເພື່ອຮອງຮັບການພັດທະນາຂອງປະເທດຊາດ; 2) ປັບປຸງວຽກງານສາທາລະນະສຸກ ແລະ ການບໍລິການດ້ານສາທາລະນະສຸກໃຫ້ມີຄຸນນະພາບແລະທົ່ວເຖິງ; 3) ພັດທະນາສີມືແຮງງານ ໃຫ້ໄດ້ປະລິມານ ແລະ ຄຸນນະພາບ ເພື່ອຕອບສະໜອງຄວາມຕ້ອງການພັດທະນາ; 4)ບຸກຄະລາກອນຂອງພາກລັດ ໄດ້ຮັບການພັດທະນາ ແລະ ມີຄຸນນະພາບສູງຂຶ້ນ.

3. ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ຕົວເມືອງ ແລະ ເຂດຊົນນະບົດ ໄດ້ຮັບການພັດທະນາຢ່າງສົມຄູ່ແລະແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ຫຼຸດລົງເທື່ອລະກ້າວ ໂດຍມີ 6 ແຜນວຽກຈຸດສຸມຄື: 1) ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃຫ້ມີຄຸນນະພາບດີຂຶ້ນ; 2)ປັບປຸງວຽກງານຄ້ຳປະກັນສະບຽງອາຫານແລະໂພຊະນາການໃຫ້ທົ່ວເຖິງ ແລະ ມີຄຸນນະພາບສູງຂຶ້ນ; 3) ສົ່ງເສີມ ແລະພັດທະນາໄວໜຸ່ມ, ແມ່ຍິງ, ເດັກ ແລະ ຄວາມສະເໝີພາບຍິງ-ຊາຍ ໃຫ້ມີຄຸນນະພາບດີຂຶ້ນ; 4) ພັດທະນາວຽກງານຖະແຫຼງຂ່າວ ໃຫ້ທັນສະໄໝ ແລະ ວ່ອງໄວ, ສົ່ງເສີມວັດທະນະທຳທີ່ເປັນເອກະລັກຂອງຊາດ, ກ້າວໜ້າ ແລະ ສ້າງໃຫ້ສັງຄົມມີຄວາມສາມັກຄີເປັນປຶກແຜ່ນ ແລະ ສີວິໄລ; 5) ປັບປຸງລະບົບປະກັນສັງຄົມ-ປົກປ້ອງສັງຄົມໃຫ້ກວ້າງຂວາງ ແລະ ມີຄຸນນະພາບ; 6) ແກ້ໄຂບັນຫາລະເບີດບໍ່ທັນແຕກ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກ ໃຫ້ດີຂຶ້ນເທື່ອລະກ້າວ.

4. ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ມີຄວາມຍືນຍົງ ແລະ ສາມາດກຽມ ພ້ອມຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ ໂດຍມີ 3 ແຜນວຽກຈຸດສຸມຄື: 1) ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້, ທີ່ດິນ, ນ້ຳ ແລະ ແຮ່ທາດ ຢ່າງມີແຜນການ, ປະຢັດ, ໃຫ້ເກີດປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ; 2) ສົ່ງເສີມວຽກງານການເຕີບໂຕສີຂຽວ ແລະ ວຽກງານການແກ້ໄຂບັນຫາປ່ຽນແປງດິນຟ້າອາກາດ ເພື່ອຫຼຸດຜ່ອນ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງ; 3) ເພີ່ມທະວີການປ້ອງກັນ, ການຄວບຄຸມ ແລະການຟື້ນຟູຫຼັງໄພພິບັດຕ່າງໆ.

5. ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນ ຢ່າງກວ້າງຂວາງ ແລະ ມີປະສິດທິຜົນ ໂດຍມີ 4 ແຜນວຽກຈຸດສຸມຄື: 1) ພັດທະນາໂຄງລ່າງພື້ນຖານທີ່ສາມາດເຊື່ອມຈອດ-ເຊື່ອມໂຍງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອເອື້ອອຳນວຍໃຫ້ແກ່ການຜະລິດ, ບໍລິການ, ການຄ້າ ແລະ ການລົງທຶນ; 2)ເສີມຂະຫຍາຍການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນກັບພາກພື້ນ ແລະ ສາກົນ ຢ່າງຕັ້ງໜ້າ ແລະ ກວ້າງຂວາງຂຶ້ນກວ່າເກົ່າ; 3) ພັດທະນາແຄວ້ນ ແລະ ທ້ອງຖິ່ນ ໃຫ້ມີຄວາມສົມດຸນ, ເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ;4)ພັດທະນາຕົວເມືອງ ແລະເຂດເສດຖະກິດພິເສດ ໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າແລະການທ່ອງທ່ຽວ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

6. ການຄຸ້ມຄອງ-ບໍລິຫານລັດໃຫ້ມີປະສິດທິພາບ, ການເມືອງມີສະຖຽນລະພາບ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳແລະສີວິໄລ ໂດຍມີ 3 ແຜນວຽກຈຸດສຸມຄື: 1) ຍົກສູງປະສິດທິພາບການປົກຄອງ-ການຄຸ້ມຄອງບໍລິຫານລັດ ໃຫ້ມີຄວາມກະທັດຮັດ, ວ່ອງໄວແລະເຂັ້ມງວດຕາມກົດໝາຍ ແລະ ວຽກງານ 3 ສ້າງ ໃຫ້ເຂົ້າສູ່ລວງເລິກ ແລະ ປະຕິບັດຕົວຈິງຢ່າງມີປະສິດທິພາບສູງ; 2) ປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນ ໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ; 3) ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການ ເມືອງ, ມີຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິ ປະໄຕ, ຍຸຕິທຳ ແລະ ສີວິໄລ.

## 5 ເດືອນຕົ້ນປີ...

(ຕໍ່ຈາກໜ້າ 1)

ແຫ່ງຊາດ ແລະ ການແກ້ໄຂບັນຫາເຄັ່ງຮ້ອນທາງເສດຖະກິດ ໂດຍສະເພາະຂົງເຂດເສດຖະກິດ ໄດ້ສຸມໃສ່ຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດ ເຊິ່ງສາມາດສັງລວມຜົນການປະຕິບັດທີ່ພົ້ນເດັ່ນຈຳນວນໜຶ່ງດັ່ງນີ້:

1. ການຂະຫຍາຍຕົວທາງດ້ານເສດຖະກິດ ໄດ້ປະເມີນເປັນໄຕມາດ, ໄຕມາດ 1 ປີ 2025 ຂະຫຍາຍ ຕົວໃນລະດັບ 4.5%, ຄິດເປັນມູນຄ່າໃນປີເທົ່າກັບ 84,207 ຕື້ກີບ ເທົ່າກັບ 22.4% ຂອງແຜນການ (ມະຕິສະພາ: 375,968 ຕື້ກີບ) ໃນນີ້: ຂະແໜງກະສິກຳ ຂະຫຍາຍຕົວ 3.1% ກວມເອົາ 20.2% (ມະຕິສະພາ: 4.3% ກວມເອົາ 22.39%); ຂະແໜງອຸດສາຫະກຳ ຂະຫຍາຍຕົວ 4.7% ກວມເອົາ30.9% (ມະຕິສະພາ:4.3% ກວມເອົາ30.36%); ຂະແໜງບໍລິການ ຂະຫຍາຍຕົວ 4.7% ກວມເອົາ37.1% (ມະຕິສະພາ: 5.5% ກວມເອົາ 34.29%) ແລະ ພາສີ-ອາກອນຜະລິດຕະພັນສຸດທິ ຂະຫຍາຍຕົວ 4.3% ກວມເອົາ11.7% (ມະຕິສະພາ: 4.5% ກວມເອົາ 13.0%).

2. ການປະຕິບັດແຜນງົບປະມານແຫ່ງລັດ, ຜ່ານການປະຕິບັດໃນໄລຍະ 5 ເດືອນ ສາມາດສັງລວມໄດ້ດັ່ງນີ້:

1) ດ້ານລາຍຮັບງົບປະມານ: ຮອດວັນທີ 6 ມິຖຸນາ 2025ສາມາດເກັບລາຍຮັບງົບປະມານ ໄດ້ 33,565 ຕື້ກີບ ເທົ່າກັບ 49% ຂອງແຜນການປີ (ແຜນການປີ 68,100 ຕື້ກີບ) ຫຼືເທົ່າກັບ 8.95% ຂອງ GDP (ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 20% ເປັນເງິນປະມານ7,607ຕື້ກີບ), ໃນນັ້ນ: ລາຍຮັບພາຍໃນ 31,892 ຕື້ກີບ ເທົ່າກັບ 51% ຂອງແຜນການປີ ໃນນີ້ ສູນກາງ 21,631 ຕື້ກີບ ເທົ່າກັບ 50% ຂອງແຜນການປີ ແລະ ທ້ອງຖິ່ນ 10,261 ຕື້ກີບ ເທົ່າກັບ 53% ຂອງແຜນການປີ; ຄາດຄະເນ 6 ເດືອນຕົ້ນປີ 2025 ຈະສາມາດເກັບລາຍຮັບໄດ້ປະມານ 37,100 ຕື້ກີບ ເທົ່າກັບ 54.42% ຂອງແຜນການປີ.

2) ດ້ານລາຍຈ່າຍງົບປະມານ: ປະຕິບັດໄດ້ 22,968 ຕື້ກີບ ເທົ່າກັບ 32% ຂອງແຜນການປີ (ແຜນການປີ 71,850 ຕື້ກີບ), ຄາດຄະເນ 6 ເດືອນຕົ້ນປີ 2025 ຈະປະຕິບັດໄດ້ປະມານ 36,380 ຕື້ກີບ ເທົ່າກັບ 50.63% ຂອງແຜນການປີ.

3) ການແກ້ໄຂໜີ້ສິນພາຍໃນ ແລະ ຕ່າງປະເທດ: ສາມາດສະສາງໜີ້ສິນພາຍໃນ 2,301 ກວ່າຕື້ກີບ ທຽບເທົ່າ 13.54% ຂອງແຜນປີ ແລະ ໜີ້ສິນຕ່າງປະເທດ 533.58 ລ້ານໂດລາສະຫະລັດ ທຽບເທົ່າ 29.38% ຂອງແຜນປີ.

3. ການຮັກສາສະຖຽນລະພາບດ້ານເງິນຕາ, ໃນໄລຍະ 5 ເດືອນຜ່ານມາ ເຫັນໄດ້ວ່າ:

- ອັດຕາເງິນເຟີ້: ຫຼຸດລົງເປັນແຕ່ລະເດືອນ, ສະເລ່ຍ 5 ເດືອນຕົ້ນປີຢູ່ໃນລະດັບ 11.76% (ຫຼຸດລົງຫຼາຍຖ້າທຽບໃສ່ໄລຍະດຽວກັນຂອງປີ 2024 ເຊິ່ງຢູ່ໃນລະດັບ 24.77%), ຄາດວ່າໝົດປີອັດຕາເງິນເຟີ້ຈະຢູ່ໃນລະດັບບໍ່ເກີນ 1 ຕົວເລກ ຕາມຄາດໝາຍທີ່ສະພາແຫ່ງຊາດຮັບຮອງ;
- ປະລິມານເງິນ M2: ຂະຫຍາຍຕົວຢູ່ໃນລະດັບ 15.36% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ຮອດທ້າຍເດືອນ 6 ຄາດວ່າຈະຢູ່ໃນລະດັບ 14.86% ແລະ ຮອດທ້າຍປີ 2025 ຄາດວ່າຈະສາມາດບັນລຸໄດ້ຕາມຄາດໝາຍທີ່ສະພາແຫ່ງຊາດຮັບຮອງ ໂດຍຈະຂະຫຍາຍຕົວບໍ່ເກີນ20% ທຽບໃສ່ປີຜ່ານມາ;
- ອັດຕາແລກປ່ຽນ: ທຽບໃສ່ທ້າຍປີ 2024, ເງິນກີບແຂງຄ່າ 0.2% ທຽບ ໃສ່ເງິນໂດລາ ແລະ ອ່ອນຄ່າ 0.42% ທຽບກັບເງິນບາດ, ສ່ວນຕ່າງລະຫວ່າງອັດຕາແລກປ່ຽນຂອງທະນາຄານ ແລະ ຕະຫຼາດ ແມ່ນຢູ່ໃນລະດັບ 0.06% ສຳລັບເງິນກີບ/ໂດລາ ແລະ 0.21% ສຳລັບເງິນກີບ/ບາດ;
- ຄັງສຳຮອງເງິນຕາຕ່າງປະເທດ: ມີຈຳນວນ 2,760.50 ລ້ານໂດລາສະຫະລັດ, ກຸ້ມການນຳເຂົ້າ5.03ເດືອນ, ຮອດທ້າຍປີ2025ຄາດວ່າຈະສາມາດບັນລຸໄດ້ຕາມຄາດໝາຍທີ່ສະພາແຫ່ງຊາດຮັບຮອງ ໂດຍສາມາດກຸ້ມການນຳເຂົ້າໄດ້ບໍ່ຫຼຸດ 5 ເດືອນ;
- ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs) ບັນລຸຕາມຄາດໝາຍ: ຢູ່ໃນລະດັບ 1.38%, ຄາດວ່າຮອດທ້າຍປີ 2025 ຈະບັນລຸໄດ້ຕາມຄາດໝາຍຕາມທີ່ສະພາແຫ່ງຊາດຮັບຮອງ ເຊິ່ງຢູ່ໃນລະດັບທີ່ບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ;
- ການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກຜ່ານລະບົບທະນາຄານ: ສາມາດຄຸ້ມຄອງລາຍຮັບຈາກການສົ່ງອອກໄດ້68.74% ຂອງມູນຄ່າການສົ່ງອອກທັງໝົດ, ຄາດຄະເນໝົດປີ 2025 ຈະສາມາດບັນລຸຕາມຄາດໝາຍທີ່ວາລະແຫ່ງຊາດກຳນົດໄວ້ (ຄາດໝາຍບໍ່ໃຫ້ຫຼຸດ 70%); ທະນາຄານທຸລະກິດ 9 ແຫ່ງ ໄດ້ໂອນເງິນຂອງລັດຖະບານເຂົ້າບັນຊີລວມສູນຄັງເງິນ (ຫຼືເອີ້ນຫຍໍ້ວ່າ TSA) ຢູ່ທະນາຄານ ແຫ່ງ ສປປລາວ ຈຳນວນເງິນທຽບເປັນເງິນກີບ 26,822ຕື້ກີບເພີ່ມຂຶ້ນ6,996 ຕື້ກີບ ຫຼື 35.29% ທຽບໃສ່ປີ 2024 (19,826 ຕື້ກີບ); ອະນຸມັດເງິນສິນເຊື່ອ ລວມວົງເງິນກູ້ຢືມຈາກທະນາຄານທຸລະກິດ 4,748ຕື້ກີບ ໃຫ້49ຫົວໜ່ວຍ; ອະນຸມັດວົງເງິນກູ້ຢືມເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ 1,765 ຕື້ກີບ ໃຫ້ 922 ຫົວໜ່ວຍຢູ່ 18ແຂວງ, ເບີກຖອນເງິນກູ້ຕົວຈິງ 1,607 ຕື້ກີບ (ໃນນັ້ນ, ຂະແໜງບໍລິການ-ທ່ອງທ່ຽວ ແລະ ການຄ້າ ກວມຫຼາຍກວ່າໝູ່ ໃນລະດັບ51.68% ເຊິ່ງສ່ວນໃຫຍ່ແມ່ນຕັ້ງຢູ່ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ແຂວງຊຽງຂວາງ).

4. ການຮັກສາສະຖຽນລະພາບດ້ານລາຄາສິນຄ້າ

ການນຳເຂົ້ານ້ຳມັນເຊື້ອໄຟ: ມີບໍລິມາດ 904 ລ້ານກວ່າລິດ ເພີ່ມຂຶ້ນທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ໂດຍສະເລ່ຍໃນປີ 2025 ມີການນຳເຂົ້າ 165 ລ້ານລິດ/ເດືອນ.

5. ການຜະລິດກະສິກຳເປັນສິນຄ້າ

- ການຜະລິດເຂົ້ານາແຊງ ປະຕິບັດໄດ້ໃນເນື້ອທີ່84,715 ເຮັກຕາ ໄດ້ຮັບຜົນຜະລິດ 423,830 ໂຕນເທົ່າກັບ94% ຂອງແຜນການ (450.000 ໂຕນ), ທຽບໃສ່ປີຜ່ານມາຫຼຸດລົງ 3,000 ໂຕນ;
- ການຜະລິດພືດສະບຽງອາຫານ ປະຕິບັດໄດ້ໃນເນື້ອທີ່ 146,520 ເຮັກຕາ ລື່ນແຜນການ 136,630 ເຮັກຕາ ຫຼື ລື່ນ 7.23% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ; ເຈລະຈາສົ່ງອອກສິນຄ້າກະສິກຳໄປ ສປຈີນ ໄດ້ຫຼາຍລາຍການ ເປັນຕົ້ນ: ປາຊວາຍ 442 ໂຕນ, ໝາກມ່ວງ 90 ໂຕນ ແລະ ຄາດວ່າໃນປີນີ້ ບໍລິສັດຈະສົ່ງອອກໝາກມ່ວງ 1,500 ໂຕນ; ເຈລະຈາສົ່ງອອກສິນຄ້າກະສິກຳອື່ນໆໄປປະເທດຕ່າງໆ ໄດ້ທັງໝົດ74 ລາຍການ; ພ້ອມກັນນີ້, ພວມດຳເນີນຂັ້ນຕອນການສົ່ງເຂົ້າສານໄປປະເທດບຣູໄນ, ເຈລະຈາສັນຍາສົ່ງອອກເຂົ້າສານໄປປະເທດບັງກລາເທດ 200,000 ໂຕນຕໍ່ປີ ແລະ ເຈລະຈາການສົ່ງອອກຊີ້ນແຊ່ແຂງ ແລະ ຜະລິດຕະພັນຊີ້ນ ໄປ ສປຈີນ ຕິດພັນກັບເລັ່ງກໍ່ສ້າງໂຮງງານຂ້າສັດທັນສະໄໝ. ສັງລວມແລ້ວ, ມູນຄ່າສົ່ງອອກຜະລິດຕະພັນກະສິກຳໃນ 5 ເດືອນຕົ້ນປີ 2025 ບັນລຸໄດ້977 ລ້ານໂດລາສະຫະລັດ ເທົ່າກັບ65% (ແຜນການຕາມສະພາແຫ່ງຊາດຮັບຮອງ 1,500 ລ້ານໂດລາສະຫະລັດ).

6. ການຄຸ້ມຄອງໂຄງການບໍ່ແຮ່

ສຸມໃສ່ຄຸ້ມຄອງ, ຕິດຕາມ ແລະ ກວດກາໂຄງການແຮ່ທາດທີ່ໄດ້ອະນຸມັດຜ່ານມາ ໂດຍໄດ້ອອກຄຳສັ່ງສະບັບເລກທີ06/ນຍ, ລົງວັນທີ 07 ມີນາ 2025; ປັດຈຸບັນ ພວມສຸມໃສ່ຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວຢ່າງເຂັ້ມງວດ ໂດຍໄດ້ມອບໃຫ້ຄະນະສະເພາະກິດຕາມຂໍ້ຕົກລົງສະບັບເລກທີ 47/ນຍ, ລົງວັນທີ 25 ເມສາ 2025 ລົງກວດກາແກ້ໄຂ ເຊິ່ງສາມາດອາຍັດພາຫະນະ ແລະ ເຄື່ອງອຸປະກອນໃນການຂຸດຄົ້ນແຮ່ທາດໄດ້ເປັນຈຳນວນຫຼາຍສົມຄວນ. ປະຕິບັດມາດຕະການໂຈະການພິຈາລະນາໂຄງການໃໝ່ສຳລັບແຮ່ໂລຫະຢ່າງເຂັ້ມງວດ ທັງສືບຕໍ່ສຸມໃສ່ກວດກາໂຄງການແຮ່ຄຳ, ແຮ່ຫາຍາກ ແລະແຮ່ທາດອື່ນໆທີ່ໄດ້ຮັບອະນຸຍາດຜ່ານມາ ແລະ ປະຕິບັດມາດຕະການເຂັ້ມງວດ, ເດັດຂາດຕໍ່ໂຄງການທີ່ລະເມີດສັນຍາ, ການລາຍງານຂໍ້ມູນຜົນການຜະລິດບໍ່ຖືກກັບຄວາມເປັນຈິງ.

7. ການແກ້ໄຂສະພາບຂາດແຄນໄຟຟ້າ

ສຸມໃສ່ແກ້ໄຂສະພາບຂາດແຄນໄຟຟ້າ ແລະ ໄດ້ເລັ່ງຊຸກຍູ້ໂຄງການແຫຼ່ງຜະລິດທີ່ຈັດໃນບຸລິມະສິດ ເຊັ່ນ: 1) ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳງື່ມ 3 (ເປັນຂອງລັດວິສາຫະກິດໄຟຟ້າລາວ) ໃຫ້ສຳເລັດໃນປີ2027, ປັດຈຸບັນ ໄດ້ຮັບແຫຼ່ງທຶນຈາກພາຍໃນປະເທດ ເພື່ອມາກໍ່ສ້າງໃຫ້ສຳເລັດຕາມແຜນ; 2) ຊຸກຍູ້ໂຄງການພະລັງງານແສງຕາເວັນຂະໜາດໃຫຍ່ 12 ຈຸດບຸລິມະສິດ, ກຳລັງຕິດຕັ້ງ 650 MW, ປັດຈຸບັນ ໄດ້ສຳເລັດການເຊັນ Tariff MOU ໄປແລ້ວ 280 MW, ໃນນັ້ນ ໄດ້ສຳເລັດການກໍ່ສ້າງ ແລະ ປ່ອຍກະແສໄຟຟ້າແລ້ວ 1 ໂຄງການ 50 MW; 3) ຊຸກຍູ້ໂຄງການພະລັງງານແສງຕາເວັນຂະໜາດນ້ອຍ 5 MW ລົງມາ ເພື່ອເສີມໃສ່ສະຖານີໄຟຟ້າໃນຈຸດທີ່ຂາດແຄນໄຟຟ້າແລະ 4) ສືບຕໍ່ ຕິດຕາມ, ຊຸກຍູ້ໂຄງການເຂື່ອນໄຟຟ້າ ແລະ ແຫຼ່ງຜະລິດປະເພດອື່ນ ທີ່ມີສັນຍາຊື້-ຂາຍໄຟຟ້າກັບລັດວິສາຫະກິດໄຟຟ້າລາວ ໃຫ້ກໍ່ສ້າງໂຄງການສຳເລັດຕາມແຜນການກຳນົດ.

8. ການແກ້ໄຂຍານພາຫະນະທີ່ນຳເຂົ້າບໍ່ຖືກຕ້ອງ ແລະ ນຳໃຊ້ບໍ່ຖືກເປົ້າໝາຍ ແລະການຄຸ້ມຄອງລົດລັດ

- ສາມາດຢຶດລົດໃຫຍ່ໄດ້ 32 ຄັນ ແລະ ກັກໄດ້ 14 ຄັນ; ປັດຈຸບັນ, ພວມເລັ່ງສືບສວນ-ສອບສວນເປົ້າໝາຍ ປອມແປງເອກະສານ ແລະ ມີສ່ວນກ່ຽວພັນກັບການລັກລອບນຳເຂົ້າຍານພາຫະນະດັ່ງກ່າວ ແລະ ພວມສຸມໃສ່ກວດກາ ແລະ ຂຶ້ນບັນຊີລົດເຖື່ອນ ເພື່ອແກ້ໄຂຕາມທິດຊີ້ນຳຂອງກົມການເມືອງ.
- ສາມາດເກັບກຳລົດລັດໄດ້ 37,427 ຄັນ, ໃນນີ້: ຢູ່ຂັ້ນສູນກາງ 8,959 ຄັນ ແລະ ຂັ້ນທ້ອງຖິ່ນ 28,468 ຄັນ ທັງສຸມໃສ່ການປະຕິບັດແຜນສະສາງລົດຂອງລັດ ເຊິ່ງຕາມແຜນມີ3,211 ຄັນ, ໃນນັ້ນ ໄດ້ສຳເລັດການສະສາງແລ້ວ 1,702 ຄັນ ເທົ່າກັບ 53% ຂອງຕົວເລກແຜນການສະສາງລົດທັງໝົດ, ສາມາດເກັບລາຍຮັບທັງໝົດ69.90ຕື້ກີບ.

9. ການປະຕິຮູບລັດວິສາຫະກິດ

ໄດ້ສຸມໃສ່ປັບປຸງ 4 ລັດວິສາຫະກິດໃຫຍ່ ແລະ ສຳຄັນຄື: ໄຟຟ້າລາວ, ການບິນລາວ, ນ້ຳມັນເຊື້ອໄຟລາວ ແລະ ທະນາຄານນະໂຍບາຍ, ໃນນີ້:

- ລັດວິສາຫະກິດໄຟຟ້າລາວ: ໄດ້ສືບຕໍ່ປະຕິບັດແຜນປະຕິຮູບທີ່ໄດ້ຮັບຮອງຜ່ານມາ ໃນໄລຍະປີ 2022, ແຕ່ໄດ້ມີການປັບປຸງຄືນບາງແຜນງານເພື່ອໃຫ້ແທດເໝາະກັບສະພາບການປ່ຽນແປງແຕ່ລະໄລຍະ ໂດຍໄດ້ສຸມໃສ່ການສ້າງລາຍຮັບຈາກທຸກທ່າແຮງທັງທາງກົງ ແລະ ທາງອ້ອມ, ທັງຕັດລາຍຈ່າຍທີ່ບໍ່ຈຳເປັນອອກ; ປັບປຸງລະບົບ-ລະບຽບການຄຸ້ມຄອງດ້ານການເງິນ-ການບັນຊີໃຫ້ມີຄວາມໂປ່ງໃສກວດສອບໄດ້; ພ້ອມກັນນັ້ນ ກໍໄດ້ປັບປຸງສະພາບໍລິຫານ ແລະ ຄະນະຜູ້ອຳນວຍການຄືນໃໝ່.
- ລັດວິສາຫະກິດການບິນລາວ: ໄດ້ສຸມໃສ່ຈັດຕັ້ງຜັນຂະຫຍາຍບົດບັນທຶກການຮ່ວມທຶນກັບລັດວິສາຫະກິດຂອງສປຈີນ (ບໍລິສັດ COMAC) ຕາມການຕົກລົງ ແລະ ຊີ້ນຳຂອງກົມການເມືອງສູນກາງພັກ, ປັດຈຸບັນ ພວມເລັ່ງໃຫ້ບໍລິສັດກວດສອບເອກະລາດມາກວດ ແລະ ຢັ້ງຢືນມູນຄ່າຊັບສິນຂອງລັດວິສາຫະກິດການບິນລາວ; ພວມຄົ້ນຄວ້າພິຈາລະນາການສະເໜີຂອງບໍລິສັດCOMAC ໃນການຮ່ວມທຶນຢ່າງຮອບຄອບ ເປັນຕົ້ນການສະເໜີເປັນຜູ້ຖືຮຸ້ນໃນອັດຕາ51%, ສະເໜີໃຫ້ນຳໃຊ້ເຮືອບິນທີ່ເປັນຜະລິດຕະພັນຂອງບໍລິສັດ COMAC ເຂົ້າໃນການດຳເນີນທຸລະກິດໃນການໃຫ້ບໍລິການດ້ານການບິນ ແລະ ສະເໜີໃຫ້ຍົກໜີ້ຜ່ານມາອອກຈາກບັນຊີຂອງການບິນລາວ;
- ລັດວິສາຫະກິດນ້ຳມັນເຊື້ອໄຟລາວ: ໄດ້ສຸມໃສ່ຄົ້ນຄວ້າການຫັນເປັນລັດຮ່ວມທຶນກັບເອກະຊົນທີ່ມີຄວາມເຂັ້ມແຂງ, ແຕ່ລັດຕ້ອງຖືຮຸ້ນຢ່າງໜ້ອຍ51% ຂຶ້ນໄປ; ປັດຈຸບັນ ພວມສຸມໃສ່ປະເມີນຊັບສິນຂອງລັດວິສາຫະກິດນ້ຳມັນເຊື້ອໄຟລາວ ເພື່ອເປັນພື້ນຖານໃນການກຳນົດຮູບແບບ ແລະ ອັດຕາການຮ່ວມທຶນ.
- ສຳລັບທະນາຄານນະໂຍບາຍ: ຈະປ່ຽນຊື່ເປັນທະນາຄານພັດທະນາຊົນນະບົດເຊິ່ງມີພາລະບົດບາດໃຫ້ບໍລິການຮັບຝາກເງິນ, ສະໜອງສິນເຊື່ອແລະຜະລິດຕະພັນອື່ນໆ; ປັດຈຸບັນ ພວມຂຸ້ນຂ້ຽວປັບປຸງລະບົບແລະກະກຽມຄວາມພ້ອມດ້ານຕ່າງໆ ເຊິ່ງຄາດວ່າຈະໃຫ້ສຳເລັດ ແລະ ທັນເປີດບໍລິການໃນປີນີ້.

10. ການປັບປຸງ ແລະ

ອ່ານຕໍ່ໜ້າ 11



## 6 ເດືອນທ້າຍປີ...

(ຕໍ່ຈາກໜ້າ 1)

ປະຊຸມຄົບຄະນະບໍລິຫານງານສູນກາງພັກຄັ້ງທີ 9 ສະໄໝທີ XI, ບັນດາມະຕິຂອງສະພາແຫ່ງຊາດ, ບັນດາວຽກ 12 ຈຸດສຸມຂອງສອງວາລະແຫ່ງຊາດ ແລະ ວຽກຈຸດສຸມຂອງການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ; ໂດຍລັດຖະບານຈະສຸມໃສ່ວຽກຈຸດສຸມຕົວຈິງຈຳນວນໜຶ່ງ ດັ່ງນີ້:

**ດ້ານເສດຖະກິດ:**

1. ສຸມໃສ່ແກ້ໄຂບັນຫາເງິນເຟີ້, ອັດຕາແລກປ່ຽນເງິນຕາ, ລາຄາສິນຄ້າແລະໜີ້ສິນຕ່າງປະເທດດ້ວຍການບັງຄັບໃຊ້ບັນດາມາດຕະການທີ່ໄດ້ວາງອອກໃຫ້ປາກົດຜົນເປັນຈິງແລະເປັນຮູບປະທຳຫຼາຍຂຶ້ນກວ່າເກົ່າ ໂດຍມອບວຽກເປັນລາຍບຸກຄົນແລະກຳນົດຄາດໝາຍເວລາເຮັດສຳເລັດ ແລະ ເວລາລາຍງານຄືນຢ່າງລະອຽດ.

2. ສືບຕໍ່ຍູ້ແຮງເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ (GDP ຂະຫຍາຍຕົວຢູ່ໃນລະດັບ 4.8%) ໂດຍນຳໃຊ້ທຸກທ່າແຮງທີ່ມີ; ສືບຕໍ່ພັດທະນາ ແລະ ຮັບປະກັນຄວາມໝັ້ນຄົງດ້ານພະລັງງານ; ຊຸກຍູ້ສົ່ງເສີມການສ້າງໂຮງງານອຸດສາຫະກຳ ແລະ ອຸດສາຫະກຳປຸງແຕ່ງ ເຂົ້າສູ່ລວງເລິກ ເຊັ່ນ: ຜະລິດຝຸ່ນຊີວະພາບ, ທົວອາຫານສັດ, ວັດສະດຸກໍ່ສ້າງ, ເຄື່ອງອຸປະໂພກ-ບໍລິໂພກ; ສຸມໃສ່ປັບປຸງໂຄງລ່າງພື້ນຖານແລະລະບົບການບໍລິການຂົນສົ່ງ ໃຫ້ມີຄວາມສະດວກ, ວ່ອງໄວເພື່ອສົ່ງເສີມການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ.

3. ດຳເນີນນະໂຍບາຍເງິນຕາຢ່າງຮັດກຸມ ແລະ ນະໂຍບາຍອັດຕາແລກປ່ຽນຢ່າງມີປະສິດທິພາບ; ຄຸ້ມຄອງເງິນຕາຕ່າງປະເທດທີ່ມາຈາກການລົງທຶນ, ການສົ່ງອອກ-ນຳເຂົ້າສິນຄ້າຜ່ານລະບົບທະນາຄານ ຕິດພັນກັບສົ່ງເສີມການນຳໃຊ້ເງິນກີບ ແລະ ການນຳໃຊ້ສະກຸນເງິນທ້ອງຖິ່ນກັບປະເທດໃກ້ຄຽງ.

4. ເລັ່ງທັນເປັນທັນສະໄໝໃນການເກັບລາຍຮັບທີ່ມີຖານລາຍຮັບແລ້ວ ໃຫ້ສຳເລັດໄວແລະຄົ້ນຄວ້າຂະຫຍາຍຖານລາຍຮັບໃໝ່ທີ່ມີທ່າແຮງ. ດ້ານລາຍຈ່າຍງົບປະມານ ຈະສຸມໃສ່ວຽກງານບຸລິມະສິດຂອງລັດຖະບານ, ນຳໃຊ້ແຫຼ່ງລາຍຮັບພາຍໃນເພື່ອແກ້ໄຂໜີ້ສິນພາຍໃນ ແລະ ຕ່າງປະເທດ ທັງຫຼຸດຜ່ອນການກູ້ຢືມຢ່າງຕັ້ງໜ້າ; ພ້ອມນັ້ນ, ກໍສຸມໃສ່ປະຕິບັດລາຍຈ່າຍບ້ວງເງິນເກີນແຜນປີ 2024 ເພື່ອແກ້ໄຂໜີ້ສິນພາຍໃນດ້ວຍຮູບການຕ່າງໆທີ່ເໝາະສົມ ແລະ ຮັບໃຊ້ວຽກງານຈຳເປັນຈຳນວນໜຶ່ງຂອງລັດຖະບານ ແລະ ທ້ອງຖິ່ນ.

5. ສືບຕໍ່ເລັ່ງທວງການປະຕິບັດພັນທະໜີ້ສິນຈາກພາກສ່ວນຕ່າງໆ ທີ່ໄດ້ເຈລະຈາ ແລະ ຕົກລົງຮ່ວມກັນ ໃຫ້ສຳເລັດຕາມສັນຍາແລະຄາດໝາຍທີ່ວາງໄວ້.

6. ສຸມໃສ່ບູລະນະ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດ ແລະ ທາງຫຼວງທ້ອງຖິ່ນໃນຂອບເຂດທົ່ວປະເທດ ທັງຈັດສັນງົບປະມານບ້ວງກອງທຶນທາງເຂົ້າໃນການສ້ອມແປງເສັ້ນທາງໃຫ້ທັນການ; ຊຸກຍູ້ການກໍ່ສ້າງທາງດ່ວນແບບ BOT ໃຫ້ໄດ້ເຊັນສັນຍາສຳປະທານໄວ, ໃນນັ້ນສະເພາະທາງດ່ວນວຽງຈັນ-ຮ່າໂນ້ຍ ສູ້ຊົນໃຫ້ໄດ້ເຊັນສັນຍາສາປະທານ ແລະ ເລີ່ມລົງມືກໍ່ສ້າງໃນທ້າຍປີນີ້.

7. ສືບຕໍ່ດັດສົມຈຳນວນບໍລິສັດນຳເຂົ້າ-ສົ່ງອອກ, ຄຸ້ມຄອງການນຳເຂົ້າສິນຄ້ານອກລະບົບຢ່າງເຂັ້ມງວດ ແລະ ຈຳກັດການນຳເຂົ້າສິນຄ້າຟຸມເຟືອຍ ແລະ ສິນຄ້າທີ່ພາຍໃນສາມາດຜະລິດກຸ້ມຕົນເອງ.

8. ສືບຕໍ່ປັບປຸງກົນໄກ, ລະບຽບການສົ່ງເສີມການລົງທຶນ ແລະ ການດຳເນີນທຸລະກິດ ໃຫ້ມີຄວາມສະດວກ, ວ່ອງໄວຂຶ້ນ; ສຸມໃສ່ຕິດຕາມກວດກາບັນດາໂຄງການລົງທຶນທີ່ໄດ້ຮັບອະນຸມັດ, ໂຄງການໃດບໍ່ມີຄວາມຄືບໜ້າ ຫຼື ມີຄວາມຄືບໜ້າຊ້າ, ບໍ່ປະຕິບັດຕາມສັນຍາ, ສົ່ງຜົນກະທົບໜັກໜ່ວງຕໍ່ສິ່ງແວດລ້ອມ ແລະ ສັງຄົມແມ່ນຈະປະຕິບັດມາດຕະການເດັດຂາດດ້ວຍການຍົກເລີກ ຫຼື ຖອນເອົາໂຄງການຄືນ.

9. ເອົາໃຈໃສ່ຄຸ້ມຄອງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ເປັນຕົ້ນ: ແຮ່ຄຳ, ແຮ່ທາຍາກ, ແຮ່ເກືອໂປຕາສແລະອື່ນໆ ໃຫ້ຮັດກຸມ ແລະ ເຂັ້ມງວດ ທັງຮີບຮ້ອນຄົ້ນຄວ້ານະໂຍບາຍຕົວຈິງຈານວນໜຶ່ງ ເພື່ອສ້າງໂຮງງານປຸງແຕ່ງແຮ່ສຳເລັດຮູບຢູ່ພາຍໃນປະເທດ.

10. ສຸມໃສ່ແກ້ໄຂສະພາບຂາດແຄນໄຟຟ້າ ໂດຍເລັ່ງສ້າງພະລັງງານແສງຕາເວັນເສີມໃສ່ສະຖານີໄຟຟ້າໃນຈຸດທີ່ຂາດແຄນໄຟຟ້າ ແລະ ຊຸກຍູ້ໂຄງການທີ່ໄດ້ອະນຸມັດ ເລັ່ງກໍ່ສ້າງໃຫ້ສຳເລັດຕາມແຜນ.

11. ຍູ້ແຮງສົ່ງເສີມການຜະລິດກະສິກຳ ເພື່ອຄ້ຳປະກັນສະບຽງອາຫານ, ທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກໃຫ້ຫຼາຍ; ສືບຕໍ່ສົ່ງເສີມຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃຫ້ແຂງແຮງກວ່າເກົ່າ.

12. ສືບຕໍ່ປະຕິຮູບບັນດາລັດວິສາຫະກິດໃຫຍ່ ໃຫ້ສຳເລັດຕາມແຜນການທີ່ວາງໄວ້, ກະຊວງຈັດກອງປະຊຸມເປີດກວ້າງວຽກປະຕິຮູບລັດວິສາຫະກິດທົ່ວປະເທດ.

**ດ້ານວັດທະນະທຳ-ສັງຄົມ:**

1. ສືບຕໍ່ປະຕິບັດນະໂຍບາຍອຸດໜູນຄູອາສາສະໝັກ ແລະ ແກ້ໄຂສະພາບປະລະການຮຽນຂອງນັກຮຽນ, ນັກສຶກສາ ໃຫ້ເປັນຮູບປະທຳຫຼາຍຂຶ້ນ; ສືບຕໍ່ປັບປຸງຫຼັກສູດ ແລະ ລະບົບການຮຽນຢູ່ຊັ້ນ-ຂັ້ນຕ່າງໆ ໃຫ້ກ້າວໄປສູ່ຄຸນນະພາບທີ່ດີຂຶ້ນກວ່າເກົ່າ.

2. ຍົກລະດັບໂຮງໝໍຂັ້ນຕ່າງໆ ໃຫ້ໄດ້ມາດຕະຖານ, ສະໜອງອຸປະກອນການແພດ ແລະ ບັນຈຸພະນັກງານຕາມແຜນ, ປັບປຸງແລະຂະຫຍາຍການບໍລິການປິ່ນປົວສຸຂະພາບໃຫ້ທົ່ວເຖິງ ແລະ ເຂັ້ມແຂງ.

3. ສຸມໃສ່ພັດທະນາສີມືແຮງງານ, ດັດສົມແຮງງານໃຫ້ພຽງພໍກັບຄວາມຕ້ອງການຂອງຕະຫຼາດຢູ່ພາຍໃນ ແລະ ຕ່າງປະເທດ; ສືບຕໍ່ປະຕິບັດມາດຕະການຕ່າງໆ ເພື່ອແກ້ໄຂສະພາບຂາດແຄນແຮງງານພາຍໃນປະເທດ; ເອົາໃຈໃສ່ຄຸ້ມຄອງແຮງງານຕ່າງປະເທດທີ່ມາອອກແຮງງານຢູ່ສປປລາວ ໃຫ້ເຄື່ອນໄຫວຖືກຕ້ອງຕາມກົດໝາຍແລະລະບຽບການກຳນົດ, ປັບປຸງລະບົບການຄຸ້ມຄອງແຮງງານໃຫ້ມີຄວາມທັນສະໄໝ.

4. ສຸມໃສ່ປັບປຸງວຽກງານຖະແຫຼງຂ່າວໃຫ້ມີຄວາມວ່ອງໄວ ແລະ ທັນສະໄໝ, ປັບປຸງ ແລະ ຂະຫຍາຍສື່ຕ່າງໆ ໃຫ້ມີຄວາມຫຼາກຫຼາຍ ໂດຍການປັບປຸງໂຄງລ່າງພື້ນຖານດ້ານສື່ມວນຊົນ, ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນດ້ານປະລິມານ ແລະ ຄຸນນະພາບ; ສືບຕໍ່ສົ່ງເສີມການທ່ອງທ່ຽວຢ່າງແຂງແຮງດ້ວຍການນຳໃຊ້ນະໂຍບາຍແລະມາດຕະການແທດຕົວຈິງ ໃຫ້ເຂົ້າເຖິງກຸ່ມຕະຫຼາດເປົ້າໝາຍ ພ້ອມທັງສຸມໃສ່ປັບປຸງພື້ນຖານໂຄງລ່າງເປັນຕົ້ນສະຖານທີ່ທ່ອງທ່ຽວ, ເສັ້ນທາງ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວອື່ນໆ ໂດຍມີການສົມທົບແໜ້ນກັບທຸກພາກສ່ວນທັງພາກລັດ ແລະ ເອກະຊົນໃນທົ່ວສັງຄົມ ເພື່ອສ້າງສະພາບແວດລ້ອມທີ່ດີ, ບໍລິການນັກທ່ອງທ່ຽວໃຫ້ມີຄວາມປະທັບໃຈ.

5. ສືບຕໍ່ຍູ້ແຮງວຽກງານຂຶ້ນທະບຽນອອກໃບຕາດິນໃນຂອບເຂດທົ່ວປະເທດ ໂດຍເລັ່ງສົບຊ້ອນພະນັກງານເພື່ອລົງເຮັດວຽກຂັ້ນເມືອງ, ສຸມໃສ່ການຈັດສັນທີ່ດິນຂັ້ນເມືອງ ແລະ ບ້ານ ເພື່ອຮັບຮູ້ສິດນຳໃຊ້ທີ່ດິນຂອງປະຊາຊົນໃນເຂດທີ່ດິນປ່າໄມ້ ແລະ ເຂດທີ່ມີການສຶກສາຄວາມເປັນໄປໄດ້ໃນການລົງທຶນພັດທະນາຕ່າງໆ ພ້ອມທັງປັບປຸງລະບົບຄຸ້ມຄອງທີ່ດິນໄປຕາມທິດທັນເປັນທັນສະໄໝ.

6. ສືບຕໍ່ເລັ່ງໃສ່ການຈັດສັນພູມລຳເນົາ ແລະ ສ້າງອາຊີບຄົງທີ່ ແລະ ໝັ້ນຄົງ ໃຫ້ແກ່ປະຊາຊົນ; ຊຸກຍູ້ ແລະ ສົ່ງເສີມທຸກພາກສ່ວນໃນສັງຄົມ ເປັນຕົ້ນ ນັກທຸລະກິດ, ຜູ້ປະກອບການ ໃຫ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາຊົນນະບົດຮອບດ້ານ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ.

## ສະເໜີ...

(ຕໍ່ຈາກໜ້າ 1)

ໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ແລະ 2 ວາລະແຫ່ງຊາດ ທີ່ຍັງມີຄວາມຄືບໜ້າໜ້ອຍ ໃຫ້ບັນລຸຕາມແຜນການ, ໃນນັ້ນ ສະເໜີໃຫ້ລັດຖະບານສຸມໃສ່ແກ້ໄຂບັນຫາທີ່ເຄັ່ງຮ້ອນດ້ານເສດຖະກິດ-ສັງຄົມໃນປັດຈຸບັນເປັນຕົ້ນ:

1) ແກ້ໄຂບັນຫາເງິນເຟີ້ ຄຸ້ມຄອງໃຫ້ບັນລຸໄດ້ໜຶ່ງຕົວເລກຕາມມະຕິສະພາແຫ່ງຊາດ, ຄຸ້ມຄອງອັດຕາແລກປ່ຽນ ແລະ ຄຸ້ມຄອງລາຄາສິນຄ້າທີ່ຈຳເປັນ ເປັນຕົ້ນອາຫານ, ນ້ຳມັນເຊື້ອໄຟ, ໄຟຟ້າ, ເຄື່ອງອຸປະໂພກ-ບໍລິໂພກທີ່ກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ, ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ໂດຍສືບຕໍ່ຈັດຕັ້ງປະຕິບັດມາດຕະການໃຫ້ເປັນລະບົບຄົບຊຸດ ແລະ ເຂັ້ມງວດ ຕິດພັນກັບທຸກຂະແໜງການ;

2) ແກ້ໄຂບັນຫາເຄັ່ງຮ້ອນທາງດ້ານວັດທະນາທຳ-ສັງຄົມ ເປັນຕົ້ນ (1) ການສະໜອງຄູສອນ, ການອຸດໜູນຄູ-ແພດອາສາສະໝັກ, (2) ການພັດທະນາຍົກລະດັບສີມືແຮງງານ, ການສ້າງວຽກເຮັດງານທຳ, (3) ການປັບປຸງກອງທຶນປະກັນສຸຂະພາບ ແລະ ການຍົກສູງຄຸນນະພາບການບໍລິການຮັກສາສຸຂະພາບ;

3) ເອົາໃຈໃສ່ແກ້ໄຂບັນຫາຢາເສບຕິດ, ການລັກລອບຄ້າຂາຍເຖື່ອນແລະປາກົດການຫຍໍ້ທໍ້ດ້ານສັງຄົມ ໃຫ້ຫຼຸດໜ້ອຍຖອຍລົງ, ມີຄວາມເຂັ້ມງວດ ແລະ ເດັດຂາດ ໃຫ້ບັນລຸຕາມຄາດໝາຍຂອງວາລະແຫ່ງຊາດ.

3. ເອົາໃຈໃສ່ຊຸກຍູ້ສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າແລະເປັນສິນຄ້າສົ່ງອອກ ໃຫ້ແຂງແຮງຂຶ້ນກວ່າເກົ່າຕາມລາຍການສິນຄ້າທີ່ສາມາດຜະລິດພາຍໃນປະເທດແລະລາຍການສິນຄ້າທີ່ໄດ້ເຈລະຈາສົ່ງອອກໄປຕ່າງປະເທດ, ປະຕິບັດມາດຕະການຈຳກັດສິນຄ້ານຳເຂົ້າທີ່ສາມາດຜະລິດຢູ່ພາຍໃນທົດແທນການນຳເຂົ້າ ແລະ ສົ່ງເສີມການຜະລິດສົ່ງອອກໃຫ້ຫຼາຍຂຶ້ນ ທັງສົ່ງເສີມ ແລະ ສ້າງຄ່ານິຍົມໃນການຊົມໃຊ້ຜະລິດຕະພັນພາຍໃນໃຫ້ເປັນຮູບປະທຳ.

4. ຮີບຮ້ອນຈັດສັນງົບປະມານລົງທຶນລັດ, ບ້ວງກອງທຶນທາງປີ 2025 ໃຫ້ສຳເລັດ ແລະ ສູ້ຊົນສ້ອມແປງເສັ້ນທາງທີ່ເປ່ເພ ໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ ເພື່ອອຳນວຍຄວາມສະດວກການຂົນສົ່ງສິນຄ້າ, ການສັນຈອນຂອງປະຊາຊົນແລະການທ່ອງທ່ຽວ ໂດຍສະ ເພາະໃນລະດູຝົນ; ດຶງດູດການລົງທຶນຂອງທຸກພາກສ່ວນເສດຖະກິດໃນຮູບແບບຕ່າງໆ ເພື່ອກໍ່ສ້າງ ແລະ ບູລະນະໂຄງລ່າງພື້ນຖານຂອງວຽກງານໂຍທາທິການ ແລະ ຂົນສົ່ງ, ຄວບຄຸມລົດບັນທຸກສິນຄ້ານ້ຳໜັກເກີນ ແລະ ມີມາດຕະການຕໍ່ຜູ້ລະເມີດຢ່າງເຂັ້ມງວດ, ຮີບຮ້ອນກໍ່ສ້າງຕາຝັ່ງເຈື່ອນ ທີ່ເປັນຈຸດລໍ່ແຫຼມຕາມຊາຍແດນແລະຈຸດທີ່ມີການເຊາະເຈື່ອນຢ່າງຮ້າຍແຮງ ໃຫ້ສຳເລັດ.

5. ເອົາໃຈໃສ່ຄຸ້ມຄອງ, ສ້ອມແປງບັນດາໂຄງການຊົນລະປະທານ ເພື່ອຮັບປະກັນການສະໜອງນ້ຳໃຫ້ແກ່ການຜະລິດຂອງຊາວກະສິກອນ ໃຫ້ໄດ້ຕາມແຜນການ ເພື່ອສົ່ງເສີມການຜະລິດກະສິກຳມີຕົ້ນທຶນຕ່ຳ ສາມາດແຂ່ງຂັນກັບຕ່າງປະເທດໄດ້ພ້ອມທັງຄົ້ນຄວ້າສະໜອງສິນເຊື່ອ ແກ່ຊາວກະສິກອນ ແລະ ຫົວໜ່ວຍທຸລະກິດທີ່ຜະລິດຝຸ່ນ, ປຸຍ, ແນວພັນ, ຢາຂ້າສັດຕູພືດ, ອຸປະກອນ ແລະ ເຄື່ອງມືຮັບໃຊ້ການຜະລິດກະສິກຳ ຈຳໜ່າຍພາຍໃນ ຫຼຸດຜ່ອນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ.

6. ນຳໃຊ້ເຄື່ອງມື ແລະ ລະບົບທັນສະໄໝ ໃນການເກັບລາຍຮັບຢູ່ທຸກຂະແໜງການ ແລະ ຄຸ້ມຄອງລາຍຈ່າຍໃຫ້ເປັນລະບົບຄົບຊຸດ, ລວມສູນ ແລະ ສາມາດເຊື່ອມຕໍ່ກັບທຸກຂະແໜງການ; ເອົາໃຈໃສ່ເກັບລາຍຮັບຈາກຖານລາຍຮັບທີ່ເປັນທ່າແຮງໃຫ້ຄົບຖ້ວນຕາມກົດໝາຍ ແລະ ສັນຍາການລົງທຶນ ແລະ ການເຊົ່າ-ສຳປະທານ; ສືບຕໍ່ປະຕິຮູບລັດວິສາຫະກິດໃຫ້ມີປະສິດທິຜົນ, ມີກຳໄລ ສ້າງລາຍຮັບເຂົ້າງົບ ປະມານ, ສ້າງຖານລາຍຮັບໃໝ່ຈາກການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ອາກອນທີ່ດິນ, ການທ່ອງທ່ຽວ, ການຄ້າດິຈິຕອນ ແລະ ອື່ນໆ; ສະກັດກັ້ນບໍ່ໃຫ້ເກີດໜີ້ສິນເພີ່ມຂຶ້ນ ເພື່ອຮັບປະກັນໃຫ້ພື້ນຖານລະບົບການເງິນແຫ່ງຊາດມີຄວາມໝັ້ນຄົງ, ຮັກສາສະຖຽນລະພາບ ເສດຖະກິດມະຫາພາກ.

7. ສ້າງສະຖຽນລະພາບດ້ານເງິນຕາ, ຍົກສູງການນຳໃຊ້ເງິນກີບ, ຄຸ້ມຄອງການຖືຄອງ ແລະ ໃຊ້ຈ່າຍເງິນຕາຕ່າງປະເທດໃຫ້ເຄັ່ງຄັດ ແລະ ຮັດກຸມເຂົ້າຕື່ມ, ບໍ່ໃຫ້ຜູກຂາດການນຳໃຊ້ເງິນຕາຕ່າງປະເທດສະກຸນເງິນໃດໜຶ່ງ, ຄຸ້ມຄອງການນຳເຂົ້າເງິນຕາຈາກການສົ່ງອອກໃຫ້ຜ່ານລະບົບທະນາຄານ ໃຫ້ໄດ້ 70% ຂຶ້ນໄປຕາມມະຕິກອງປະຊຸມສະພາແຫ່ງຊາດ ເພື່ອເພີ່ມຄັງສຳຮອງ ໃຫ້ກຸ້ມການນຳເຂົ້າ 6-7 ເດືອນຂຶ້ນໄປ ແລະ ແກ້ໄຂການຂາດດຸນຊຳລະກັບຕ່າງປະເທດ (BOP) ໃຫ້ຫຼຸດລົງ.

8. ຄຸ້ມຄອງການນຳໃຊ້ຊັບພະຍາກອນທຳມະຊາດໃຫ້ສອດຄ່ອງຕາມກົດໝາຍຢ່າງເຂັ້ມງວດ, ສ້າງນິຄົມອຸດສາຫະກຳຕົວແບບ, ເຂດອຸດສາຫະກຳປຸງແຕ່ງແຮ່ທາດເປັນຜະລິດຕະພັນສຳເລັດຮູບກ່ອນສົ່ງອອກ; ຄັດເລືອກນັກລົງທຶນທີ່ດີ, ມີຄຸນນະພາບ, ແບບມືອາຊີບ ເຂົ້າມາພັດທະນາ; ຊຸກຍູ້ໂຄງການພັດທະນາພະລັງງານແສງຕາເວັນ, ພະລັງງານລົມ ເສີມໃສ່ບັນດາສະຖານີຈຸດທີ່ຂາດແຄນໄຟຟ້າໃຫ້ສຳເລັດຕາມແຜນໂດຍໄວ ເພື່ອສະໜອງໄຟຟ້າໃຫ້ພຽງພໍ ແລະ ເອົາໃຈໃສ່ຄຸ້ມຄອງລາຄາໄຟຟ້າໃຫ້ເໝາະສົມກັບສະພາບຕົວຈິງ ແລະ ບໍ່ກະທົບກະເທືອນຕໍ່ຊີວິດຂອງປະຊາຊົນ ແລະ ການຜະລິດກະສິກຳ.

9. ເອົາໃຈໃສ່ປະຕິບັດຄາດໝາຍດ້ານຊັບພະຍາກອນທຳມະຊາດ ແລະ ແກ້ໄຂບັນຫາສິ່ງແວດລ້ອມໃຫ້ໄດ້ຕາມຄາດໝາຍ, ໂດຍສະເພາະ ການອອກໃບຕາດິນໃຫ້ໄດ້ຕາມມະຕິສະພາແຫ່ງຊາດຮັບຮອງ ເພື່ອເປັນຖານລາຍຮັບທີ່ໝັ້ນຄົງຂອງງົບປະມານແຫ່ງລັດ.

10. ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງລັດຄຸ້ມຄອງສັງຄົມດ້ວຍກົດໝາຍ, ເອົາໃຈໃສ່ປະຕິບັດກົດໝາຍຢ່າງເຂັ້ມງວດ ແລະ ເດັດຂາດ, ຫຼຸດຜ່ອນການຍົກເວັ້ນການປະຕິບັດພັນທະພາສີອາກອນ ແລະ ການແກ້ໄຂຜົນການກວດສອບ-ກວດກາໃຫ້ໄດ້ຢ່າງຂາດຕົວ.



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຊາດ;ເຂົ້າຮ່ວມມີທ່ານທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ, ບັນດາທ່ານການນຳຂັ້ນສູງ ແລະ ອະດີດການນຳຂັ້ນສູງຂອງພັກ-ລັດ, ທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແລະ ບັນດາທ່ານສະມາຊິກລັດຖະບານ, ບັນດາທ່ານສະມາຊິກສະພາແຫ່ງຊາດ(ສສຊ) ຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ບັນດາທ່ານທູຕານຸທູດ, ຕາງໜ້າອົງການຈັດຕັ້ງສາກົນປະຈຳສປປລາວແລະແຂກຖືກເຊີນ.

ພາຍຫຼັງທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວສູນທອນພິດເປີດກອງປະຊຸມຢ່າງເປັນທາງການ. ກອງປະຊຸມໄດ້ຮັບຟັງບົດລາຍງານຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການວຽກງານຈຸດສຸມ 6 ເດືອນທ້າຍປີ 2025 ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ແລະ ການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ; ທ່ານ ສົມມາດ ພົລເສນາຮອງປະທານສະພາແຫ່ງຊາດຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ກໍໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງທ່ານນາຍົກລັດຖະມົນຕີ. ຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມ ທັງໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນ; ບັນດາທ່ານ ສສຊ ກໍໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ ຈົນຮອດພາກເຊົ້າຂອງວັນທີ 10 ມິຖຸນາ. ສ່ວນຕອນບ່າຍຂອງວັນດຽວກັນ, ໄດ້ມີການຊີ້ແຈງຕໍ່ຄຳຊັກຖາມຂອງສະພາແຫ່ງຊາດຈາກກະຊວງ, ອົງການ ຈຳນວນ 5ພາກສ່ວນ(ກະຊວງການເງິນ, ທະນາຄານແຫ່ງສປປລາວ, ກະຊວງອຸດສາຫະກຳແລະການຄ້າ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກະຊວງໂຍທາທິການ ແລະ ຂົນສົ່ງ ຕາມລຳດັບ) ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ.

ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX ຈະດຳເນີນໄປຈົນຮອດວັນທີ 26 ມິຖຸນາ 2025, ຄະນະເລຂາທິການສະພາແຫ່ງຊາດໄດ້ຈັດຕັ້ງໜ່ວຍງານເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນທີ່ຈະສົ່ງໄປຍັງກອງປະຊຸມ ເຊິ່ງສາມາດສົ່ງຕາມວິທີລຸ່ມນີ້:

-ສາຍດ່ວນ ໝາຍເລກ: 156 (ໃນໂມງລັດຖະການ)

-ອີເມວ:nalao.156@gmail.com

-ແອັບພລິເຄຊັນ:LaoNa

**(ນາງ ອາລິນ ສຸພົມມະປະດິດ)**




# ດຳເນີນຊີວິດ ໃຫ້ຮູ້ຈັກຄວາມອົດທົນ

**# ດົ້ນກົບເມກ**

ຜູ້ຂຽນຍົກມານຳສະເໜີ ຂຽນອະທິບາຍເພື່ອກະຕຸກເຕືອນກັນໃຫ້ເຂົ້າໃຈຄວາມສຳຄັນຂອງຄວາມອົດທົນທີ່ມີບົດບາດຕັດສິນຊີ້ຊາຕາຊີວິດ ຈະເລີນ ຫຼື ຍາກຈົນ ຫຼາຍຄົນມາແລ້ວ, ບາງຄົນຮຽນສູງ ເຮັດອາຊີບດີ ໄດ້ເງິນຫຼາຍ, ແຕ່ບາງຄັ້ງຂາດຄວາມອົດທົນ ເມື່ອກະທົບກັບບັນຫາກໍໃຈຮ້ອນຕັດສິນໃຈຫອບໜີ ພາໃຫ້ບໍ່ກ້າວໜ້າ ຜູ້ເປັນນາຍກໍບໍ່ກ້າເລືອກໃຊ້ຢ່າລືມວ່າເຫຼັກຈະດີໄດ້ຕ້ອງໄດ້ຜ່ານແປວໄຟຫຼາຍຄັ້ງ.

ຄວາມອົດທົນຂອງຄົນເຮົາກໍຂຶ້ນກັບຈິດໃຈ ແລະ ຮ່າງກາຍ ເຊິ່ງເມື່ອເຮົາພົບອຸປະສັກ-ບັນຫາພາໃຫ້ຈິດໃຈເຈັບປວດ ເພາະໃຈເຮົາມັນໄດ້ຜ່ານຄວາມລົ້ມເຫຼວ, ຄວາມທຸກ, ຄວາມດູຖູກ ແລະ ຄວາມສູນເສຍທັງໝົດ ຄືສະພາບທົດສອບຄວາມເຂັ້ມແຂງຂອງຫົວໃຈ ພາໃຫ້ເຂັ້ມແຂງກ້າສູ້ວຽກງານຈຶ່ງໄດ້ດີ ເຫຼັກຈະແຂງແກ່ນຍ້ອນຜ່ານໄຟ ໃຈຄົນເຮົາກໍເຊັ່ນກັນ ຕ້ອງໄດ້ຜ່ານຜ່າອຸປະສັກຈຶ່ງຈະສຳເລັດໄດ້; ເຮົາຕ້ອງເຂົ້າໃຈວ່າ ຕາບໃດທີ່ຍັງມີຊີວິດເມື່ອເຮົາແກ້ບັນຫາໄດ້ອັນໜຶ່ງຕໍ່ມາໂລກກໍຈະສົ່ງບົດທົດສອບໃຫຍ່ກວ່າ ເຂົ້າມາໃນຊີວິດເຮົາຕໍ່ໄປເຮົາຈຶ່ງຕ້ອງອົດທົນເຂັ້ມແຂງເພື່ອສູ້ວຽກສູ້ກັບອຸປະສັກ ຖ້າເຮົາຝຶກຊີວິດແບບນີ້ ເຮົາກໍຈະມີນິດໄສໜັກເອົາເບົາສູ້,ຮຽນຮູ້ບັນຫາ-ແກ້ບັນຫາ ເຮົາກໍຈະກາຍເປັນຜູ້ສະຫຼາດ; ພໍ່ແມ່ຜູ້ປົກຄອງກໍເຊັ່ນດຽວກັນ ຖ້າວ່າປ່ອຍໃຫ້ລູກໄດ້ຄິດເອງ-ເພິ່ງຕົນເອງ ເຂົາກໍຈະໄດ້ໃຊ້ຄວາມຄິດ, ປັນຍາ ແກ້ບັນຫາ ພາໃຫ້ເຂົາເຂັ້ມແຂງຮູ້ເອົາໂຕລອດ, ເຂົ້າສັງຄົມ ໄດ້ດີກວ່າລ້ຽງຕາມໃຈຢ້ານແຕ່ລູກທຸກ.

ຄວາມອົດທົນຈຶ່ງແມ່ນຄຸນສົມບັດອັນໜຶ່ງສຳຄັນຂອງຜູ້ສຳເລັດກ້າວໜ້າໃນອາຊີບ, ສຳລັບຫົວໜ້າ ຫຼື ຜູ້ນຳ ຍິ່ງອົດທົນຫຼາຍກວ່າລູກນ້ອງ! ສະເໜີແລກປ່ຽນ.




# ວິທີເຮັດວຽກ

**ພາກທີ 7**

**ບັນຫາພະນັກງານ**

ຮັກແພງ ແມ່ນໝັ່ນເອົາໃຈໃສ່ວຽກງານຂອງເຂົາເຈົ້າສຳຫຼວດເຂົາເຈົ້າເລື້ອຍໆ ຖ້າເຫັນມີຂໍ້ບົກພ່ອງກໍ່ຕ້ອງຊ່ວຍແກ້ໄຂໂລດ, ເຊີດຊູນໃຈກ້າຫານຮັບຜິດຊອບ, ກ້າຫານເຮັດວຽກຂອງເຂົາເຈົ້າ ຂຶ້ນ. ພ້ອມກັນນັ້ນກໍ່ຕ້ອງຊີ້ແຈງຂໍ້ດີ ແລະ ຂໍ້ສຳເລັດຂອງເຂົາເຈົ້າໃຫ້ເຫັນຄັກ. ເຮັດແນວນັ້ນບໍ່ແມ່ນເຮັດໃຫ້ເຂົາເຈົ້າອວດອົ່ງທະນົງ ຕົວດອກ, ແມ່ນເຮັດເພື່ອໃຫ້ເຂົາເຈົ້າຫ້າວຫັນຕື່ມ ແລະ ອອກແຮງອົດທົນຂຶ້ນຕື່ມ. ຕ້ອງເຊີດຊູແນວຄິດຈິດໃຈຂອງເຂົາເຈົ້າໃຫ້ກ້າວໜ້າໄປເຖິງບ່ອນ "ປະລາໄຊບໍ່ທໍ້ຖອຍ, ມີໄຊຊະນະບໍ່ອວດອົ່ງ" ເວລາຕຳໜິເຂົາເຈົ້ານັ້ນພວກເຮົາຢ່າຊູ່ວາງທ່າທີຮ້າຍກາດ. ເວລາຍ້ອງຍໍເຂົາເຈົ້າ, ເຮົາກໍຕ້ອງເວົ້າໃຫ້ເຂົາເຈົ້າເຂົ້າໃຈວ່າຄວາມສາມາດຂອງແຕ່ລະຄົນນັ້ນມັນມີຂອບເຂດ, ແມ່ນວ່າໄດ້ຮັບຄວາມສຳເລັດກໍບໍ່ຄວນອວດອົ່ງ, ການອວດອົ່ງແມ່ນບາດກ້າວທຳອິດຂອງການປະລາໄຊ.

ຈ) ການປະພຶດຕໍ່ພະນັກງານທີ່ຜິດພາດ: ມະນຸດໃນໂລກ ບໍ່ໃຜກໍມີຂໍ້ບົກພ່ອງ. ຜູ້ເຮັດວຽກຍ່ອມມີການຜິດພາດຢູ່ສະເໝີ. ມີແຕ່ຜູ້ບໍ່ເຮັດຫຍັງຈຶ່ງບໍ່ມີຄວາມຜິດພາດ. ແຕ່ວ່າການບໍ່ເຮັດຫຍັງມັນ ກໍຊຳເປັນການຜິດພາດ, ເພາະຂີ້ຄ້ານ ແລະ ບໍ່ເປັນປະໂຫຍດແກ່ຊາດ.

ອ່ານຕໍ່ສະບັບໜ້າ...

# ຫາລືຫົວຂໍ້ທີ່ຈະນຳເຂົ້າກອງປະຊຸມສະໄໝສາມັນ ແລະ ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງວິລະບູລີ



(ສພຂ) - ວັນທີ 02 ມິຖຸນາຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ໄດ້ຈັດກອງປະຊຸມພາຍໃຕ້ການເປັນປະທານຂອງທ່ານ ນາງ ພູທອນ ແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີບັນດາທ່ານໃນຄະນະປະຈຳ, ຮອງປະທານຄະນະກຳມະການ, ຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານພາຍໃນ ສພຂ; ຈຸດປະສົງແມ່ນເພື່ອປຶກສາຫາລືບັນດາຫົວຂໍ້ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມຮ່ວມກັບອົງການປົກຄອງແຂວງ ແລະ ຜ່ານຮ່າງມະຕິແບ່ງໜ້າທີ່ຮັບຜິດຊອບຂອງຄະນະຮັບຜິດຊອບກະກຽມແຜນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ ສະຫວັນນະເຂດ ຊຸດທີ II.

ປະທານກອງປະຊຸມໄດ້ເນັ້ນໜັກໃຫ້ບັນດາອະນຸກຳມະການທີ່ຖືກແຕ່ງຕັ້ງຮັບໃຊ້ກອງປະຊຸມ ຕ້ອງເປັນເຈົ້າການປະສານສົມທົບເຊິ່ງກັນແລະກັນ ເພື່ອຮັບປະກັນທາງດ້ານເນື້ອໃນຕໍ່ບັນດາຫົວຂໍ້ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 9 ໃຫ້ທັນຕາມກຳນົດເວລາ, ພ້ອມກັນນັ້ນ ກໍໄດ້ມີຄຳເຫັນສະຫຼຸບ ແລະ ເນັ້ນໃຫ້ທຸກພາກສ່ວນ ຈົ່ງພ້ອມກັນສືບຕໍ່ຈັດຕັ້ງປະຕິບັດວຽກງານທີ່ຍັງຄ້າງຄາ ໃຫ້ມີຜົນສຳເລັດ ແລະ ຮັບປະກັນຄຸນນະພາບ.

ກ່ອນໜ້ານັ້ນ ຄືວັນທີ 7-9 ພຶດສະພາ, ທ່ານ ນາງ ພູທອນ ແກ້ວພູວົງ ພ້ອມດ້ວຍຄະນະປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ ໄດ້ລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງເມືອງວິລະບູລີເຊິ່ງມີຜູ້ເຂົ້າຮ່ວມທີ່ມາຈາກບັນດາຈຸດສຸມ ແລະ ກຸ່ມບ້ານ ທັງໝົດ 237 ຄົນ, ຍິງ 123 ຄົນ ໂດຍໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ.

ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ ແລະ ມີຄຳເຫັນແລກປ່ຽນເພື່ອໃຫ້ຜູ້ມີສິດເລືອກຕັ້ງເຂົ້າໃຈຕໍ່ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ກໍຄືຂອງເມືອງ ແລະ ກຸ່ມບ້ານ; ພ້ອມກັນນັ້ນ, ກໍມີຂໍ້ສະເໜີຈາກປະຊາຊົນ ໃຫ້ສະພາປະຊາຊົນແຂວງ ຊ່ວຍຍຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂບັນຫາຕ່າງໆ ພາຍໃນບ້ານໂດຍສະເພາະແມ່ນການກໍ່ສ້າງພື້ນຖານໂຄງລ່າງ.

ການມາເຄື່ອນໄຫວຄັ້ງນີ້, ຍັງໄດ້ມອບອຸປະກອນການສຶກສາທີ່ປະກອບມີປຶ້ມແລະບິກ ລວມມູນຄ່າ 12.9 ລ້ານກີບ.





## ສຸກສະບາຍຫາຍໂຣຄ

# ອັນຕະລາຍຈາກພລາສະຕິກອ່ອນ

# ຮຽບຮຽງໂດຍ: ທິວາທິ



ໃນຖົງຢາງພລາສະຕິກອ່ອນທຸກຊະນິດທີ່ໃຊ້ຫໍ່ຫຸ້ມອາຫານ, ບັດເອທີເອັມ, ຜ້າມ່ານໃນຫ້ອງນ້ຳ ແລະ ອື່ນໆ ມີສານເຄມີທີ່ເອີ້ນວ່າ: ພາທາເລດ (phthalate) ທີ່ຊ່ວຍເພີ່ມຄວາມອ່ອນຂອງວັດຖຸ ເຊິ່ງຖ້າໄດ້ຮັບສານນີ້ເຂົ້າໄປຫຼາຍ ຈະເຮັດໃຫ້ມີຄວາມສ່ຽງຕໍ່ຄວາມດັນເລືອດສູງ ໂດຍໄດ້ຮັບການຢືນຢັນການຄົ້ນຄວ້າຈາກສະຖາບັນPediatrics ເຊິ່ງໄດ້ເກັບຜົນການທົດສອບຈາກກຸ່ມຕົວຢ່າງຈາກເດັກນ້ອຍອາຍຸ 6-19 ປີ ແລະ ພົບວ່າເດັກນ້ອຍທີ່ໄດ້ຮັບສານເຄມີພາທາເລດ ຈະມີຄວາມດັນເລືອດສູງກວ່າເດັກນ້ອຍທີ່ບໍ່ໄດ້ຮັບສານເຄມີນີ້.

ຟັງເບິ່ງຄືວ່າບໍ່ອັນຕະລາຍຫຼາຍ ແຕ່ຕົວຈິງແລ້ວມັນເປັນອັນຕະລາຍໃນໄລຍະຍາວ ສານເຄມີນີ້ເຮັດໃຫ້ຮ່າງກາຍເກີດພາວະຄວາມຕຶງຄຽດອັອກຊີເດຊັ່ນ (oxidative stress) ນັ້ນກໍຄືການທີ່ຈຸລັງຖືກສານອະນຸມູນອິດສະຫຼະທຳລາຍ ມັນເປັນສາເຫດຂອງພະຍາດຄວາມເສື່ອມຊຳເຮື້ອຫຼາຍກວ່າ 70 ຊະນິດ ເຊິ່ງລ້ວນເປັນພື້ນຖານຂອງການເກີດພະຍາດເສັ້ນເລືອດຫົວໃຈ, ມະເຮັງ, ເສັ້ນເລືອດຕີບ, ຂໍ່ອັກເສບ ແລະ ການແຂງຕົວຂອງເນື້ອເຍື່ອແດງ; ພະຍາດຄວາມຈຳເສື່ອມ ແລະ ການເສື່ອມສະພາບສະເພາະ.

ນອກນັ້ນ, ພາທາເລດທີ່ຢູ່ໃນພລາສະຕິກຫໍ່ອາຫານຍັງຂັດຂວາງການເຮັດວຽກຂອງຕ່ອມຕ່າງໆໃນຮ່າງກາຍໂດຍສະເພາະຜູ້ທີ່ມີບັນຫາໂມເລກຸນຕ່ຳໃນເລືອດຢູ່ແລ້ວ ເຊິ່ງຈະພາໃຫ້ເກີດຄວາມຜິດປົກກະຕິຂອງຮໍໂມນ ແລະ ເພີ່ມການເຕີບໂຕຂອງເດັກຍິງ ເຮັດໃຫ້ເຕີບໃຫຍ່ເກີນອາຍຸ ແລະ ຍັງມີສ່ວນເຮັດໃຫ້ເກີດພະຍາດເບົາຫວານ, ສະມາທິສັ້ນ, ພູມແພ້ແລະຫອບຫືດ.

ດັ່ງນັ້ນ, ຖ້າສາມາດຫຼີກເວັ້ນຈາກສານເຄມີນີ້ຈະເປັນການດີທີ່ສຸດ ໂດຍຫຼີກລ່ຽງການກິນອາຫານສຳເລັດຮູບ ຫຼື ອາຫານທີ່ບັນຈຸ ຫຼື ຫໍ່ຫຸ້ມດ້ວຍພລາສະຕິກ ແລະ ສຳຄັນທີ່ສຸດບໍ່ຄວນຫໍ່ອາຫານທີ່ຫໍ່ພລາສະຕິກ ແລ້ວນຳເຂົ້າໃນໄມໂຄເວັບ ຄວນຫັນມາເກັບຮັກສາອາຫານໃສ່ໃນໂຖແກ້ວຈະດີກວ່າ ເສຍສະຫຼະຄວາມສະດວກສະບາຍເລັກນ້ອຍເພື່ອປ້ອງກັນພະຍາດ ແລະເພື່ອສຸຂະພາບທີ່ດີ.

**ແຫຼ່ງຂໍ້ມູນ:**

**www.sanook.com**

## ອາດ ກະວີລາວ

# ປົດສະໜາສອນໃຈ

# ທິດາ ອິງແກ້ວ

✼ ເດັກນ້ອຍຄົນໜຶ່ງນັ້ນ
ແລ້ວຫ່າງໄລລາເຮືອນ
ໄປຕາມທາງໂຫຍໄຫ້
ທ້ອງກໍຫິວພ່ຳພ້ອມ

ຄຽດແມ່ມານດາ
ທີ່ຢູ່ເນົາຊິ້ນ
ເສຍໃຈຄຽດແມ່ ເດັກເອີຍ!
ເງີນແຫ້ງຫ່າງຖົງ

✼ ບັງເອີນໄປພົບພໍ້
ຂາຍໝີ່ເຫຼືອງແຄມທາງ
ໝີ່ໃຫ້ຫຼານກິນລ້າ
ບອກວ່າໝີ່ຖ້ວຍນີ້

ລຸງໜຶ່ງໃຈດີ
ຍື່ນຍໍຍັງຖ້ວຍ
ລາຄາລຸງບໍ່ໄລ່ ດອກນ່າ
ລຸງມອບໃຫ້ແກ່ຫຼານ ກິນສາ!

✼ ເດັກນ້ອຍຕາຕື່ນເຕັ້ນ
ໃຫ້ໝີ່ເຫຼືອງກິນຟຣີ
ລຸງໃຈດີແທ້
ຍ້ອນໝີ່ລຸງຖ້ວຍນັ້ນ

ເຫັນເພິ່ນໃຈດີ
ຊິບໍ່ລືມຄຸນເຈົ້າ
ຫຼານຊິຂໍຈຳຈື່ ລຸງເອີຍ
ຮຽມນີ້ຈຶ່ງບໍ່ຕາຍ

✼ ສຸດທ້າຍລຸງກ່າວເວົ້າ
ໝີ່ລຸງໃຫ້ຫຼານມາ
ຄິດວາຫຼວງຫຼາຍລົ້ນ
ບາດພໍ່ແມ່ມອບໃຫ້

ຂານບອກປົດສະໜາ
ຖ້ວຍດຽວຍັງເຈົ້າ
ຈົດຈຳຊົ່ວຊີວິດ ເດີ່ນໍ
ຫຼາຍກວ່ານີ້ເຈົ້າຊ່າງລືມ

✼ ເດັກນ້ອຍນ້ຳຕາຊຶມປົ້
ຄຳລຸງຂານຈາ
ແລ້ວກໍຊຶ່ງລຶງໄຫ້
ທຳເພື່ອເຮົາຫຼາຍແທ້ໆ

ຫວນຄຶດຄວາມຜິດ
ກ່າວມາແສນຊຶ້ງ
ເສຍໃຈທີ່ຄຽດແມ່
ຫຍັງວ່າໜ້ອຍກວ່າໃຜ

✼ ບາດຄົນອື່ນເຮັດໃຫ້
ສ່ວນວ່າມານດາເຮົາ
ກໍເນີດມາພຽນລ້ຽງ
ຫຍ້ຳເຂົ້າຄຳຍື່ນປ້ອນ

ໜ້ອຍໜຶ່ງວ່າຫຼວງຫຼາຍ
ໃຫ້ແຕ່ເຮົາເນົານອນທ້ອງ
ສອນສຽງຮຽນຮ່ຳ
ສັງວ່າຄຽດຂົມຂື່ນ ໝ່າຍເດ!

✼ ມີຄຳຄົມກ່າວເວົ້າ
ທຳບຸນຫຼາຍພຽງໃດ
ຫາກວ່າໄລລືມຮ້າງ
ພະຜູ້ກຳເນີດລ້ຽງ

ຊວນຄິດຈົດຈຳ
ຄ່າສູນເສຍສິ້ນ
ຄຸນຂອງພໍ່ແມ່
ພຽນເຈົ້າໃຫຍ່ມາ ແທ້ແລ້ວ!



# ຫົກຫາຍ ລະບາຍ

(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽນທ້ຽນ

✼ **ກອງ**ປະຊຸມສະໄໝສາມັນ**ເທື່ອທີ 9** ຂອງສະພາແຫ່ງຊາດ **ຊຸດທີ IX** ພວມຄຶກຄື້ນ ຊ່ວງອາລະລາຍງານການຈັດຕັ້ງປະຕິບັດວຽກຂອງລັດຖະບານ ແລະ ການຊີ້ແຈງຂອງບັນດາກະຊວງຕ່າງໆ ຊໍຊົມເຊີຍທ່ານ ສສຊ ທີ່ໄດ້ຍົກກ່າວບັນຫາ ຄວາມໝອງໃຈຂອງປະຊາ ສູ່ສະພາຄາວນີ້ ມີບັນຫາຫຼາຍເລື້ອງ ປອງປະຊາສະເໜີຜ່ານ ສົມເປັນຕົວແທນທຸກດ້ານ ປະຊາເຊື່ອຊື່ນໃຈ **ທ່ານເອີຍ!**

✼ **ໄລ**ຍະນີ້ ກ້າວເຂົ້າສູ່ຊ່ວງລະດູຝົນ ຂໍໃຫ້ພໍ່ແມ່ພີ່ນ້ອງທຸກຄົນຈົ່ງລະມັດລະວັງການບໍລິໂພກເຫັດ ທີ່ເກີດຂຶ້ນເອງຕາມທຳມະຊາດ ເພາະອາດຈະອັນຕະລາຍເຖິງແກ່ຊີວິດໄດ້ ໃຫ້ເຈົ້າຖາມສອບເບິ່ງ ບ່ອນເກີດແບບເຫັດກ່ອນເດີ ຈ່າຢູ່ໃນເຂດກະສິກຳສີດສານເຄມີໃສ່ ຫາກເຫັດໃດເຄີຍພໍ້ ເຄີຍກິນມາກ່ອນ ຈຶ່ງຈັບເງິນຈ່າຍຊື້ ເຕືອນໄວ້ໃຫ້ລະວັງ **ທ່ານເອີຍ!**

## ຊວນຍິ້ມ

# ແອ່ນຕຸ້ງ

## ເລື່ອງ: ມານຍາຍິງ

ຜູ້ຍິງກັບຜູ້ຊາຍ ຂັບລົດຕຳກັນຢ່າງແຮງ, ແຕ່ໂຊກດີທີ່ທັງສອງຄົນບໍ່ເປັນຫຍັງ ມີແຕ່ບາດແຜເລັກນ້ອຍ, ຈຶ່ງພາກັນຄານອອກມາຈາກລົດ; ໃນລະຫວ່າງນັ້ນ, ຊາຍໜຸ່ມສັງເກດເຫັນຄູ່ກໍລະນີເປັນຍິງສາວໜ້າຕາດີ, ຊາຍໜຸ່ມຈຶ່ງເວົ້າກັບຍິງສາວວ່າ:

"ບໍ່ໜ້າເຊື່ອເນາະ ວ່າເຮົາສອງຄົນຊິລອດມາໄດ້, ອາດຊິເປັນເພາະບຸບພະສັນນິວາດທີ່ເຮັດໃຫ້ເຮົາມາພົບກັນ"

ຍິງສາວກໍເວົ້າຕໍ່ດ້ວຍຄວາມເຂີນອາຍເລັກນ້ອຍ

"ລົດຂອງຂ້ອຍເປ່ເພທັງຄັນ ແຕ່ວ່າເຫຼົ້າແວງແກ້ວນີ້ ບໍ່ເປັນຫຍັງເລີຍ ສະແດງວ່າມັນກໍເກີດມາຄູ່ກັບເຮົາແທ້ໆ, ຄັນຊັ້ນເຮົາມາດື່ມສະຫຼອງຄວາມຮັກຂອງສອງເຮົາໃນອະນາຄົດກັນເທາະ"

ຊາຍໜຸ່ມຕອບກັບດ້ວຍຮອຍຍິ້ມກຸ້ມກິ້ມ "ຍິນດີ" ພ້ອມຈັບແກ້ວແວງມາດື່ມໝົດເຄິ່ງຂວດ ກ່ອນຈະສົ່ງຄືນໃຫ້ຍິງສາວ, ຍິງສາວຈຶ່ງເວົ້າຂຶ້ນວ່າ:

"ບໍ່ເປັນຫຍັງ ຂ້ອຍວ່າຊິບົ່ງຖ້າຕຳຫຼວດຊື່ໆ ດີກວ່າ"

## ຄະຕິເຕືອນໃຈ

# ດອກຫຍ້າ

ຄວາມອ່ອນນ້ອມ ຈະເອົາຊະນະໃຈຄົນ
ຄວາມອົດທົນ ຈະເອົາຊະນະອຸປະສັກ
ຄວາມໜັກແໜ້ນ ຈະເອົາຊະນະໃຈຕົນເອງ

ລັດຖະສະພາຕ່າງປະເທດ

# ສະພາແຫ່ງຊາດຫວຽດນາມ ກຳນົດວັນເລືອກຕັ້ງຊຸດໃໝ່

(Xinhua)-ສຳນັກຂ່າວສານຫວຽດນາມ ໄດ້ລາຍງານເມື່ອວັນພຸດທີ21 ພຶດສະພາຜ່ານມາວ່າ, ສະພາແຫ່ງຊາດຫວຽດນາມ ໄດ້ກຳນົດວັນທີ 15 ມີນາ 2026 ເປັນວັນເລືອກຕັ້ງທົ່ວໄປຢ່າງເປັນທາງການ; ການເລືອກຕັ້ງຄັ້ງນີ້ ຈະກຳນົດຜູ້ແທນສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ XVI ແລະ ສະພາປະຊາຊົນທຸກຂັ້ນສຳລັບອາຍຸການ 2026-2031.

ສະພາແຫ່ງຊາດ ຊຸດທີ XVI ຈະຕ້ອງຈັດກອງປະຊຸມຄັ້ງປະຖົມມະລຶກຂອງຕົນ ບໍ່ເກີນ 60 ວັນ ຫຼັງຈາກວັນເລືອກຕັ້ງ, ໃນຂະນະທີ່ສະພາປະຊາຊົນທີ່ໄດ້ຮັບການເລືອກຕັ້ງໃໝ່ຕ້ອງຈັດກອງປະຊຸມຄັ້ງທຳອິດພາຍໃນ 45 ວັນ.

ວັນທີ 21 ພຶດສະພາ, ສສຊ ໄດ້ຮັບຮອງເອົາມະຕິທີ່ຈະຫຼຸດອາຍຸການປັດຈຸບັນຂອງສະພາແຫ່ງຊາດ ຊຸດທີ XV ແລະ ສະພາປະຊາຊົນ ລົງ 3 ເດືອນ; ຕາມມະຕິ, ກຳນົດໃຫ້ອາຍຸການປັດຈຸບັນ ຈະສິ້ນສຸດລົງໃນເດືອນເມສາ 2026 ແທນເດືອນກໍລະກົດ.

ກົມການເມືອງສູນກາງພັກກອມມູນິດຫວຽດນາມ ໄດ້ປະກາດເມື່ອວັນທີ 3 ມິຖຸນາວ່າ ບຸກຄົນທີ່ເປັນຫົວໜ້າອົງການ ຫຼື ໜ່ວຍງານທີ່ມີການສໍ້ລາດບັງຫຼວງ ຫຼື ສ້າງຄວາມເສຍຫາຍເກີດຂຶ້ນຈະບໍ່ໄດ້ຮັບການສະເໜີຊື່ໃຫ້ເປັນຜູ້ສະໝັກຮັບເລືອກຕັ້ງສະພາແຫ່ງຊາດ ແລະ ສະພາປະຊາຊົນທຸກຂັ້ນ.

ຖະແຫຼງການດັ່ງກ່າວແມ່ນສ່ວນໜຶ່ງຂອງຄຳສັ່ງກົມການເມືອງສູນກາງພັກສະບັບໃໝ່ເພື່ອຊີ້ນຳການກະກຽມແລະນຳພາການເລືອກຕັ້ງທີ່ຈະມາເຖິງ. ອີງຕາມຄຳສັ່ງດັ່ງກ່າວ, ບຸກຄົນທີ່ຢູ່ລະຫວ່າງການກວດກາ ຫຼື ການສືບສວນ ທີ່ມີສັນຍານຂອງການລະເມີດ ຈະຖືກຕັດສິດອອກຈາກລາຍຊື່ຂອງຜູ້ສະໝັກຮັບເລືອກຕັ້ງ.



# ສະພາຫວຽດນາມ ສະເໜີໂທດຈຳຄຸກເຂັ້ມງວດຂຶ້ນຕໍ່ອາຊະຍາກຳສິ່ງແວດລ້ອມ ແລະ ຢາເສບຕິດ

(Xinhua)-ວັນອັງຄານທີ 20 ພຶດສະພາຜ່ານມາ, ບັນດາສະມາຊິກສະພາແຫ່ງຊາດຫວຽດນາມ ໄດ້ສະເໜີໃຫ້ລົງໂທດຈຳຄຸກທີ່ເຂັ້ມງວດຂຶ້ນສຳລັບອາຊະຍາກຳດ້ານສິ່ງແວດລ້ອມບາງປະເພດ, ການກະທຳຜິດກ່ຽວກັບຢາເສບຕິດ ແລະ ການລະເມີດກົດລະບຽບຄວາມປອດໄພດ້ານອາຫານ; ການສະເໜີດັ່ງກ່າວ ໄດ້ຖືກຍົກຂຶ້ນລະຫວ່າງການປະກອບຄຳເຫັນໃສ່ຮ່າງປະມວນກົດໝາຍອາຍາສະບັບປັບປຸງ ໃນກອງປະຊຸມສະໄໝສາມັນເທື່ອທີ9 ຂອງສະພາແຫ່ງຊາດ ຊຸດທີ XV.



ການປັບປຸງດັ່ງກ່າວແມ່ນແນໃສ່ເພີ່ມທະວີການສະກັດກັ້ນ ແລະ ຍົກສູງປະສິດທິຜົນການປ້ອງກັນ ແລະ ຄວບຄຸມອາຊະຍາກຳ.

ທ່ານ ຮວ່າງ ແທ່ງ ຕຸ່ງ (Hoàng Thanh Tùng) ປະທານກຳມາທິການກົດໝາຍແລະຍຸຕິທຳ ໄດ້ສະເໜີເພີ່ມການປັບໃໝເງິນເປັນສອງເທົ່າສຳລັບຄວາມຜິດດ້ານສິ່ງແວດລ້ອມ ແລະ ອາຊະຍາກຳທີ່ເປັນໄພຂົ່ມຂູ່ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ. ທ່ານກ່າວວ່າ, ຮ່າງກົດໝາຍຄວນກຳນົດໃຫ້ຜູ້ກະທຳຜິດຕ້ອງຮັບຜິດຊອບໃນການແກ້ໄຂຕໍ່ຜົນສະທ້ອນທີ່ຕາມມາຈາກການກະທຳຂອງພວກເຂົາ.

# ສະພາແຫ່ງຊາດຮັງກາລີ ອະນຸມັດການຖອນຕົວອອກຈາກ ICC

(Xinhua) - ສະພາແຫ່ງຊາດຮັງກາລີ ໄດ້ລົງມະຕິເຫັນດີໃຫ້ປະເທດຖອນຕົວອອກຈາກສານອາຍາລະຫວ່າງປະເທດ (International Criminal Court - ICC) ໂດຍ ປີເຕີ ຊິຈຈາໂຕ (Peter Szijjarto) ລັດຖະມົນຕີກະຊວງການຕ່າງປະເທດປະກາດເມື່ອວັນອັງຄານທີ 20 ພຶດສະພາຜ່ານມາ.

ມະຕິດັ່ງກ່າວ ຜ່ານດ້ວຍຄະແນນສຽງເຫັນດີ 134 ສຽງ, ຄັດຄ້ານ37 ສຽງ, ແລະງົດອອກສຽງ 7 ສຽງ (ສະພາດຽວ, ມີສະມາຊິກ 199 ຄົນ, ອາຍຸການ 4 ປີ). ລັດຖະບານຈະແຈ້ງຜົນຢ່າງເປັນທາງການໃຫ້ເລຂາທິການໃຫຍ່ອົງການສະຫະປະຊາຊາດ (ສປຊ) ຊາບ.

ຮັງກາລີ ຕ້ອງສົ່ງໜັງສືເຖິງເລຂາທິການໃຫຍ່ ສປຊ ເພື່ອຂໍຖອນຕົວອອກຈາກICC ເນື່ອງຈາກວ່າທຳມະນູນໂຣມ (Rome) ເຊິ່ງເປັນສົນທິສັນຍາທີ່ສ້າງຕັ້ງ ICC ໄດ້ກຳນົດໃຫ້ຫົວໜ້າອົງການສະຫະປະຊາຊາດເປັນຜູ້ເກັບຮັກສາໜັງສືແຈ້ງການຖອນຕົວຢ່າງເປັນທາງການ.

ຊິຈຈາໂຕກ່າວຜ່ານວິດີໂອທີ່ລົງໃນໜ້າເຟສບຸກທາງການຂອງເຂົາ ໂດຍເນັ້ນໜັກວ່າ ຮັງກາລີ ໄດ້ມີສ່ວນຮ່ວມຢ່າງຫ້າວຫັນໃນການສ້າງຕັ້ງ ICC ໂດຍລົງນາມໃນທຳມະນູນ Rome ໃນປີ 1999 ແລະ ໃຫ້ສັດຕະຍາບັນໃນປີ 2001; ແຕ່ເຂົາກ່າວວ່າການເຄື່ອນໄຫວດັ່ງກ່າວ ໄດ້ຖືກກະຕຸ້ນໂດຍການພັດທະນາຫຼ້າສຸດ ທີ່ເຮັດໃຫ້ເກີດຄວາມກັງວົນຕໍ່ຄວາມເປັນກາງ ແລະຄວາມໜ້າເຊື່ອຖືຂອງສານ.

ຮັງກາລີ ປະກາດແຜນການຖອນຕົວອອກຈາກ ICC ໃນຕົ້ນເດືອນເມສາ ລະຫວ່າງການຢ້ຽມຢາມປະເທດຂອງ ເບນຈາມິນ ເນຕັນຢາຮູ ນາຍົກລັດຖະມົນຕີອິດສະຣາແອນ, ເນຕັນຢາຮູປະເຊີນກັບການອອກໝາຍຈັບຂອງ ICC ໃນຂໍ້ຫາກໍ່ອາຊະຍາກຳສົງຄາມຢູ່ເຂດກາຊາ.

ໃນທ້າຍເດືອນເມສາຜ່ານມາ, ຊິຈຈາໂຕ ໄດ້ສະເໜີຮ່າງກົດໝາຍຕໍ່ສະພາແຫ່ງຊາດເພື່ອສະເໜີໃຫ້ຮັງກາລີຖອນຕົວອອກຈາກ ICC ຢ່າງເປັນທາງການ.

ຮັງກາລີ ເປັນສະມາຊິກສະຫະພາບເອີຣົບປະເທດທຳອິດ ທີ່ດຳເນີນບາດກ້າວຢ່າງເປັນທາງການເພື່ອອອກຈາກ ICC.



# ສາຍພົວພັນ ປາກິດສະຖານ-ຈີນ "ເຂັ້ມແຂງກວ່າທີ່ເຄີຍມີມາ" ຫຼັງຈາກ 74 ປີ




(Xinhua) - ຊາດາ ອາຢາຊ ຊາດິກ (Sardar Ayaz Sadiq) ປະທານສະພາແຫ່ງຊາດ (ສະພາຕໍ່າ) ປາກິດສະຖານ ກ່າວເມື່ອວັນພຸດທີ 21 ພຶດສະພາຜ່ານມາວ່າ: ສາຍພົວພັນລະຫວ່າງປາກິດສະຖານ ແລະ ຈີນ ແມ່ນ "ເຂັ້ມແຂງກວ່າທີ່ເຄີຍມີມາ"; ໃນການກ່າວຄຳເຫັນທີ່ພິທີສະເຫຼີມສະຫຼອງ 74 ປີ ແຫ່ງວັນສ້າງຕັ້ງສາຍພົວພັນທາງການທູດຢູ່ສູນວັດທະນະທຳເສັ້ນທາງສາຍໄໝ ໃນນະຄອນຫຼວງອິສະລາມາບັດ, ຊາດິກ ໄດ້ສະແດງຄວາມຊົມເຊີຍ "ຄວາມໄວ້ເນື້ອເຊື່ອໃຈທາງຍຸດທະສາດທີ່ໝັ້ນຄົງ ແລະ ຄວາມເຄົາລົບເຊິ່ງກັນແລະກັນ" ທີ່ກຳນົດສາຍພົວພັນປາກິດສະຖານ-ຈີນ ໂດຍອະທິບາຍເຖິງການຮ່ວມມືໃນທຸກໄລຍະເວລາຂອງທັງສອງປະເທດ ເປັນພື້ນຖານແຫ່ງສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາຂອງພາກພື້ນ.

"ການພົວພັນຂອງພວກເຮົາກັບຈີນ ບໍ່ພຽງແຕ່ຄົງຢູ່ຍາວນານເທົ່ານັ້ນ, ຫາກຍັງເຕີບໃຫຍ່ເຂັ້ມແຂງຂຶ້ນໃນແຕ່ລະທົດສະວັດທີ່ຜ່ານໄປ; ປັດຈຸບັນ, ມິດຕະພາບນີ້ມີຄວາມໜັກແໜ້ນຫຼາຍຂຶ້ນ, ມີຄວາມກ່ຽວຂ້ອງກັນຫຼາຍຂຶ້ນ, ແລະ ເບິ່ງໄປຂ້າງໜ້າຍິ່ງກວ່າແຕ່ກ່ອນ".

ຊາດິກ ເນັ້ນໜັກເຖິງຜົນກະທົບການຫັນປ່ຽນຂອງລະບຽງເສດຖະກິດ ຈີນ-ປາກິດສະຖານ (China-Pakistan Economic Corridor - CPEC) ເຊິ່ງເປັນໂຄງການທີ່ພົ້ນເດັ່ນພາຍໃຕ້ຂໍ້ລິເລີ່ມໜຶ່ງແລວໜຶ່ງເສັ້ນທາງທີ່ຈີນສະເໜີ; ເຂົາກ່າວວ່າ ລະບຽງເສດຖະກິດມູນຄ່າຫຼາຍຕື້ໂດລາ ໄດ້ປັບປຸງຂະແໜງພະລັງງານ ແລະ ພື້ນຖານໂຄງລ່າງຂອງປາກິດສະຖານ ໃຫ້ທັນສະໄໝຂຶ້ນ, ໃນຂະນະດຽວກັນ ກໍເພີ່ມທະວີການເຊື່ອມໂຍງພາກພື້ນ ແລະ ດຶງດູດຄວາມສົນໃຈເພີ່ມຂຶ້ນຈາກບັນດາປະເທດອາຊີກາງ ແລະ ເອີຣົບຕາເວັນອອກ.

ໃນຄຳປາໄສຂອງ ຈຽງ ໄຊຕົງ (Jiang Zaidong) ເອກອັກຄະລັດຖະທູດຈີນປະຈຳປາກິດສະຖານ ໄດ້ຢືນຢັນຄຳໝັ້ນສັນຍາທີ່ໜັກແໜ້ນຂອງຈີນໃນການພັດທະນາການຮ່ວມມືທາງຍຸດທະສາດ.

"ມິດຕະພາບອັນແໜ້ນແຟ້ນຂອງພວກເຮົາ ໄດ້ເລິກເຊິ່ງຂຶ້ນທ່າມກາງຄວາມບໍ່ແນ່ນອນຂອງໂລກ" ເຂົາກ່າວ ແລະ ເສີມວ່າCPEC ໄດ້ກ້າວເຂົ້າສູ່ໄລຍະໃໝ່ແຫ່ງການພັດທະນາທີ່ມີຄຸນນະພາບສູງ ໂດຍເນັ້ນໃສ່ນະວັດຕະກຳ, ການເຕີບໂຕທີ່ເປັນມິດກັບສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ຂອງປະຊາຊົນ.

ເອກອັກຄະລັດຖະທູດກ່າວວ່າ, ຈີນຍັງຄົງເປັນຄູ່ຄ້າໃຫຍ່ທີ່ສຸດຂອງປາກິດສະຖານເປັນເວລາ 10 ປີຕິດຕໍ່ກັນ ແລະ ເສີມວ່າ ການເປີດ Khunjerab Pass ຕະຫຼອດທັງປີ ແລະ ການເປີດສະໜາມບິນສາກົນ New Gwadar ຄາດວ່າຈະເພີ່ມທະວີການຮ່ວມມືດ້ານການຄ້າລະຫວ່າງສອງປະເທດ ແລະ ການເຊື່ອມໂຍງພາກພື້ນ.

ທັງສອງຝ່າຍໃຫ້ຄຳໝັ້ນສັນຍາຈະຮັດແໜ້ນການພົບປະແລກປ່ຽນລະຫວ່າງປະຊາຊົນໃຫ້ເລິກເຊິ່ງຍິ່ງຂຶ້ນ ແລະ ເພີ່ມທະວີການປະສານງານຢູ່ບັນດາເວທີຫຼາຍຝ່າຍ ເຊັ່ນ: ອົງການສະຫະປະຊາຊາດ ແລະ ອົງການຮ່ວມມືຊຽງໄຮ້.

(Khunjerab Pass ທາງຜ່ານພູເຂົາຢູ່ຊາຍແດນພາກເໜືອຂອງປາກິດສະຖານ-ຊາຍແດນພາກຕາເວັນຕົກສຽງໃຕ້ຂອງຈີນ)

ເຝົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ມາດຕະການທາງກົດໝາຍ ເພື່ອປາບປາມການຄ້າມະນຸດ

ເນື່ອງຈາກວ່າໃນມໍ່ນີ້ໆ ກໍຈະຮອດວັນເດັກນ້ອຍສາກົນ (1 ມິຖຸນາ) ດັ່ງນັ້ນ, ບົດທີ່ສົນທະນາເລົ່າຈຶ່ງເປັນເລື່ອງເດັກໆ ໂດຍສະເພາະແມ່ນບາງບົດຮຽນກ່ຽວກັບມາດຕະການປົກປ້ອງເດັກຈາກການຕົກເປັນເຫຍື່ອການລ່ວງລະເມີດທາງເພດ ແລະ ຂໍປິດທ້າຍດ້ວຍຂ່າວການຮ່ວມມືລະຫວ່າງຫວຽດນາມກັບນາໆປະເທດ ເພື່ອປາບປາມອາຊະຍາກຳຄ້າມະນຸດ.

ເລື່ອງທີ 1 ນີ້ແມ່ນບົດຮຽນການເຄື່ອນໄຫວຕົວຈິງຂອງທາງການກຳປູເຈຍ ໃນການປາບປາມການລະເມີດສິດທິຂອງເດັກທາງເພດ. ກຳປູເຈຍມີກົດໝາຍຕ້ານການຄ້າມະນຸດທີ່ເຄັ່ງຄັດຮັດກຸມ, ເປັນເຄື່ອງມືສຳຄັນໃນການຕັດສິນຫຼາຍຄະດີກ່ຽວກັບການລະເມີດທາງເພດຕໍ່ເດັກ ເຫັນໄດ້ຈາກກໍລະນີທາງການຂອງປະເທດນີ້ ໄດ້ເປີດບັ້ນກວດລ້າງຂະບວນການຊາວຕ່າງປະເທດວ່າຈ້າງແມ່ຍິງກຳປູເຈຍໃຫ້ຖືພາແທນ ຫຼື ອັນທີ່ເອີ້ນວ່າ "ອູ້ມບຸນ" ຄະດີນີ້ໂດ່ງດັງທີ່ສຸດເມື່ອປະມານ 7-8 ປີຜ່ານມາ ໂດຍຜູ້ທີ່ເປັນຫົວໂປ່ໂຕການວ່າຈ້າງເພື່ອ "ອູ້ມບຸນ" ນັ້ນ ເປັນແມ່ຍິງຊາວອິດສະຕຣາລີ; ຂ່າວບອກວ່າໃນທີ່ສຸດຂະບວນການອຸບາດດັ່ງກ່າວກໍຖືກປາບປາມຢ່າງຮາບຄາບ, ຫົວໂປ່ໂຕການຖືກຕັດສິນຈຳຄຸກແຕ່ສຳຄັນກວ່ານັ້ນກໍຄືທາງການກຳປູເຈຍ ໄດ້ອອກກົດໝາຍສະເພາະທີ່ກຳນົດໃຫ້ການ "ອູ້ມບຸນ" ເປັນການກະທຳທີ່ຜິດກົດໝາຍ. ສຳລັບເຫດການລະເມີດທາງເພດຕໍ່ເດັກກຳປູເຈຍນັ້ນ ເກີດຂຶ້ນເມື່ອປະມານ 6 ປີຜ່ານມາທີ່ນະຄອນສຽມຣຽບ; ຜູ້ຕິດແທ້ວຄະດີແມ່ນຄົນສັນຊາດອາເມລິກາຊື່ວ່າ ທ້າວ ຣຸບ ເຈນ ຄລິນ (Rugh Janes Cline) ຜູ້ກ່ຽວໄດ້ລະເມີດທາງເພດຕໍ່ເດັກກຳປູເຈຍ ຈຳນວນ 3 ຄົນ ແຕ່ບໍ່ບອກວ່າເປັນເດັກຍິງ ຫຼື ເດັກຊາຍ, ໃນປັດຈຸບັນ ບໍ່ວ່າເດັກຍິງ ຫຼື ເດັກຊາຍ ກໍລ້ວນແຕ່ເປັນເປົ້າໝາຍຖືກລະເມີດທາງເພດເຊັ່ນກັນ. ທ້າວ ຣຸບ ເຈນ ຄລິນ ທີ່ຫຼອກກິນໄຂ່ແດງເດັກ, ສຸດທ້າຍກໍຖືກຈັບໄດ້ໄລ່ທັນ; ຜູ້ກ່ຽວຖືກບັງຄັບໃຫ້ຊົດເຊີຍຄ່າເສຍຫາຍໃຫ້ເດັກທີ່ຕົກເປັນເຫຍື່ອຜູ້ລະ 500 ໂດລາ; ຈາກນັ້ນ, ກໍໄປນອນກິນເຂົ້າລີງຢູ່ຄຸກອີກ 2 ປີເຄິ່ງ. ກົດໝາຍວ່າດ້ວຍການຄ້າມະນຸດຂອງກຳປູເຈຍ ໄດ້ກຳນົດໂທດປັບໃໝ ແລະ ໂທດທາງອາຍາ ໃສ່ຜູ້ລ່ວງລະເມີດທາງເພດຕໍ່ເດັກອາຍຸຕໍ່າກວ່າ 15 ປີ.

ບັດນີ້ມາຮອດຂ່າວປິດທ້າຍ ທີ່ເວົ້າກ່ຽວກັບການຮ່ວມມືຂອງຫວຽດນາມໃນລະດັບພາກພື້ນແລະສາກົນເພື່ອຕ້ານການຄ້າມະນຸດ. ໃນລະດັບພາກພື້ນນັ້ນຫວຽດນາມເນັ້ນການຮ່ວມມືໃນຂອບອາຊຽນພິເສດແມ່ນກັບລາວ, ຈີນ, ກຳປູເຈຍ ແລະ ໄທ ໂດຍມີການເຊັນບົດບັນທຶກຄວາມເຂົ້າໃຈນຳກັນ ກ່ຽວກັບທິດທາງສະກັດກັ້ນການຄ້າມະນຸດ; ຫວຽດນາມ ເປັນພາຄີສົນທິສັນຍາສາກົນ ເພື່ອຕ້ານການຄ້າມະນຸດ, ຫວຽດນາມປະກາດໃຊ້ກົດໝາຍຕ້ານການຄ້າມະນຸດ ສະບັບປັດຈຸບັນ ໃນປີ 2011. ໃນປີ 2019 ໄດ້ມີກໍລະນີຄົນຫວຽດນາມ ຈຳນວນ 39 ຄົນ ເສຍຊີວິດໃນຄະນະຖືກລັກລອບເຂົ້າໄປປະເທດອັງກິດ, ທັງ 39 ຄົນ ເສຍຊີວິດຍ້ອນຖືກຍັດໄວ້ໃນລົດຕູ້ ເພື່ອຕົບຕາເຈົ້າໜ້າທີ່ຕຳຫຼວດອັງກິດ; ຂ່າວໃຫ້ລາຍລະອຽດວ່າ ຜູ້ທີ່ຕົກເປັນເຫຍື່ອການຄ້າມະນຸດທັງໝົດຖືກຫຼອກໃຫ້ອອກໄປເຮັດວຽກຢູ່ຕ່າງປະເທດ ເພື່ອ "ຊີວິດທີ່ດີກວ່າ" ແຕ່ສຸດທ້າຍກໍກາຍເປັນຊາກສົບໃນລົດທີ່ຂາດອົກຊີ, ຈາກເຫດຮ້າຍຄັ້ງນີ້ ຫວຽດນາມ ໄດ້ຮ່ວມເຊັນບົດບັນທຶກຄວາມເຂົ້າໃຈກັບທາງການອັງກິດ ເພື່ອຮ່ວມມືກັນຕ້ານການຄ້າມະນຸດ. ນັບແຕ່ມີການປະກາດໃຊ້ກົດໝາຍຕ້ານການຄ້າມະນຸດ ໃນປີ 2011, ຄະດີການຄ້າມະນຸດໃນຫວຽດນາມໄດ້ຫຼຸດລົງເປັນກ້າວໆ ໃນປີ 2015 ຄະດີການຄ້າມະນຸດມີທັງໝົດ 400 ເລື່ອງ, ຈຳນວນຜູ້ຕົກເປັນເຫຍື່ອມີປະມານ 1,000 ຄົນ, ໃນປີ 2020 ຄະດີດັ່ງກ່າວໄດ້ຫຼຸດລົງເຫຼືອປະມານ 100 ກວ່າເລື່ອງ ສ່ວນຜູ້ທີ່ຕົກເປັນເຫຍື່ອນັ້ນມີປະມານ 200 ຄົນ.

ທະນາຄານພັດທະນາລາວ
LDB Bank




#ບ່າວກະບື

**ເຈົ້າ**ຂອງຮ້ານຄ້າ ເວົ້າກັບຊາຍໜຸ່ມຄົນໜຶ່ງ: "ຖ້າຂ້ອຍຈ້າງເຈົ້າ," ເບື້ອງຕົ້ນເຈົ້າຊິໄດ້ຮັບ 350,000 ກີບຕໍ່ເດືອນ ແລະ ຫຼັງຈາກ 10 ເດືອນ ຈະໄດ້ 500,000 ກີບຕໍ່ເດືອນ.

"ຊັ້ນພາຍຫຼັງ 10 ເດືອນ, ຂ້ອຍຈຶ່ງຊິກັບມາເລີ່ມເຮັດວຽກບ່າ," ຊາຍໜຸ່ມບອກ.

#BAOKBU

"If I hire you, said the shopkeeper to the youth, "you'll get 350,000 kip per month to start with and 500,000 kip in ten months."

"I'll come back after ten months," said the youth.






ທາງຄົນຍ່າງກາຍເປັນບ່ອນຈອດລົດ

● ໂດຍ : ພູຜາ

## 5 ເດືອນຕົ້ນປີ...

(ຕໍ່ຈາກໜ້າ 6)

ຍົກລະດັບໂຄງລ່າງພື້ນຖານຄົມມະນາຄົມ ແລະ ຂົນສົ່ງ

ສຳເລັດການປັບປຸງ ແລະ ຍົກລະດັບທາງເລກ 13 ເໜືອ ຊ່ວງແຕ່ສີໄຄ-ໂພນໂຮງ, ທາງເລກ 13 ໃຕ້ ຊ່ວງແຕ່ ກມ 71-ກມ 346; ກະກຽມເຊັນສັນຍາເງິນກູ້ເພື່ອຍົກລະດັບທາງເລກ 13 ໃຕ້ເຂດນະຄອນຫຼວງວຽງຈັນ (ກມ 21-ກມ 71) ; ດຳເນີນການປະມູນເພື່ອປັບປຸງ ແລະ ຍົກລະດັບທາງເລກ 2E, 2W ແລະທາງເລກ 12; ກະກຽມຟື້ນຟູແລະສ້ອມແປງທາງຫຼວງແຫ່ງຊາດເລກ 9 ໂດຍເກັບເງິນຈາກລົດບັນທຸກ ລວມທັງກະກຽມໃນຮູບແບບດັ່ງກ່າວຕາມທາງຫຼວງແຫ່ງຊາດເສັ້ນອື່ນໆ; ໄດ້ຊຸກຍູ້ໂຄງການກໍ່ສ້າງທາງດ່ວນທີ່ໄດ້ເຊັນ MOU ຜ່ານມາ ເປັນຕົ້ນທາງດ່ວນ ລາວ-ຈີນ (ແຕ່ແຂວງອຸດົມໄຊ-ຊາຍແດນບໍ່ເຕັນ), ທາງດ່ວນວຽງຈັນ-ຮ່າໂນ້ຍ.ພ້ອມນີ້ ກຳລັງເລັ່ງສ້າງແຜນໃນການບູລະນະແລະສ້ອມແປງທາງຫຼວງທ້ອງຖິ່ນ ໂດຍສະເພາະເສັ້ນທາງ 13 ເໜືອ ໂດຍນຳໃຊ້ງົບປະມານກອງທຶນທາງ; ສຸມໃສ່ໂຄງການກໍ່ສ້າງຂົວຂ້າມນ້ຳຂອງ ຫ້ວຍແກ້ວ-ກ້ອນຕື່ນ ແຂວງບໍ່ແກ້ວ ສຳເລັດ 98.85%; ໂຄງການກໍ່ສ້າງຂົວມິດຕະພາບ ລາວ-ໄທ ແຫ່ງທີ 5 ປາກຊັນ-ບຶງການ ຄືບໜ້າ 97.37% ເຊິ່ງສາມາດເຊື່ອມຈອດຂົວໃນວັນທີ 6 ມິຖຸນາຜ່ານມາ, ຄາດວ່າຈະຈັດພິທີເປີດນຳໃຊ້ໃນເດືອນທັນວາ 2025; ໂຄງການກໍ່ສ້າງຂົວ 12 ແຫ່ງ ຕາມທາງເລກ 20 ແຂວງຈຳປາສັກ ແລະ ແຂວງສາລະວັນ ຄືບໜ້າ 61.30%; ກໍ່ສ້າງຂົວຂ້າມນ້ຳຂອງ ຊຽງແມນ-ຫຼວງພະບາງ ແມ່ນຢູ່ໃນຂັ້ນຕອນທາບທາມເງິນກູ້ຢືມຈາກ NEDA; ກະກຽມລາຍງານບົດສຶກສາຄວາມເປັນໄປໄດ້ໂຄງການກໍ່ສ້າງຂົວມິດຕະພາບ ລາວ-ໄທ ແຫ່ງທີ 6 ສາລະວັນ-ອຸບົນລາດຊະທານີ ເພື່ອສະເໜີທາບທາມເງິນກູ້; ພ້ອມກັນນັ້ນ ໄດ້ສຸມໃສ່ດຳເນີນຂັ້ນຕອນຕ່າງໆ ເພື່ອປັບປຸງສະໜາມບິນສາກົນຕ່າງໆ ເປັນຕົ້ນ ສະໜາມບິນສາກົນວັດໄຕ, ຫຼວງພະບາງ ແລະ ປາກເຊ.

ການບໍລິການຂົນສົ່ງສິນຄ້າປະຕິບັດໄດ້ 3.89 ລ້ານໂຕນ ເກີນແຜນ 0.95% ຂອງແຜນການປີ, ອັນພົ້ນເດັ່ນແມ່ນການຂົນສົ່ງສິນຄ້າທາງລົດໄຟ ປະຕິບັດໄດ້ 1.52 ລ້ານໂຕນ ເກີນແຜນ 6.27% ຂອງແຜນການປີ 2025 ແລະການຂົນສົ່ງໂດຍສານທາງລົດໄຟ ໃນໄລຍະ 5 ເດືອນສາມາດປະຕິບັດໄດ້ 1.23 ລ້ານເທື່ອຄົນ (ເກີນແຜນໝົດປີ 2025 ເຖິງ 6%).

11. ຂຶ້ນທະບຽນອອກໃບຕາດິນອອກໃບຕາດິນໄດ້ 50,731 ຕອນ ຫຼື ເທົ່າກັບ 17% ຂອງແຜນການປີ 2025 (300,000 ຕອນ); ສຳເລັດການສຳຫຼວດ, ວັດແທກຕອນດິນ ແລະ ລໍຖ້າອອກໃບຕາດິນ 38,490 ຕອນ; ໄດ້ຂະຫຍາຍໜ່ວຍງານຂຶ້ນທະບຽນອອກໃບຕາດິນເພີ່ມຂຶ້ນຢູ່ 18 ເມືອງ ໃນ 18 ແຂວງ ແລະ ນະຄອນຫຼວງ ລວມທັງໝົດເປັນ 50 ເມືອງ ໃນຂອບເຂດທົ່ວປະເທດ. ພ້ອມນັ້ນ, ໄດ້ສຸມໃສ່ການຫັນລະບົບຄຸ້ມຄອງທີ່ດິນເປັນທັນສະໄໝ ໂດຍສຳເລັດການສະແກນຂໍ້ມູນສຳເນົາຕອນດິນ ຈາກລະບົບເຈ້ຍ ເປັນລະບົບດີຈີຕອນສີ ສຳເລັດ 437,540 ຕອນ ໃນ 9 ເມືອງ ຢູ່ນະຄອນຫຼວງວຽງຈັນ.

# ປະມວນພາບບັນຍາກາດກອງປະຊຸມສະໄໝສາມັນເທື່ອທີ 9 ສະພາແຫ່ງຊາດຊຸດທີ IX




**ຜູ້ຊີ້ນຳ**

ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**

ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**

ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກິກ ບຸດດາໄຊ

**ຮູບພາບປະກອບ**

ທ່ານ ສອນສັກ ວັນວິໄຊ